**ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ**

**ສາຂາ ນະຄອນຫຼວງວຽງຈັນ**

ບົດລາຍງານຖານະການເງິນ

ແລະ

ບົດລາຍງານຂອງຜູ້ກວດສອບບັນຊີພາຍນອກ

ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2014

**ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ**
**ສາຂາ ນະຄອນຫຼວງວຽງຈັນ**

**ສາລະບານ** **ໜ້າ**


| | | |
|---|---|---|
| 1 | ຂໍ້ມູນທົ່ວໄປກ່ຽວກັບສາຂາ | 1 |
| 2 | ຄວາມຮັບຜິດຊອບຂອງຄະນະຜູ້ບໍລິຫານຕໍ່ບົດລາຍງານຖານະການເງິນ | 2-3 |
| 3 | ບົດລາຍງານຂອງຜູ້ກວດສອບບັນຊີພາຍນອກ | 4-5 |
| 4 | ໃບລາຍງານຖານະການເງິນ | 6-7 |
| 5 | ໃບລາຍງານຜົນໄດ້ຮັບ | 8-9 |
| 6 | ໃບລາຍງານສ່ວນປ່ຽນແປງທຶນ | 10 |
| 7 | ໃບລາຍງານກະແສເງິນສົດ | 11-12 |
| 8 | ໝາຍເຫດປະກອບສຳລັບບົດລາຍງານຖານະການເງິນ | 13-67 |

ຂໍ້ມູນທົ່ວໄປກ່ຽວກັບສາຂາ

| | |
|---|---|
| **ສາຂາ** | ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ<br>ຈຳກັດ ສາຂາ ນະຄອນຫຼວງວຽງຈັນ |
| **ໃບອະນຸຍາດດຳເນີນກິດຈະການທະນາຄານເລກທີ** | 06/ທຫລ, ລົງວັນທີ 11 ກຸມພາ 2013.<br>ໃບທະບຽນວິສາຫະກິດເລກທີ 1497, ລົງວັນທີ<br>25 ທັນວາ 2012 |
| **ຄະນະຜູ້ບໍລິຫານ:** | ທ່ານ ລູ ຈ້ຽນ ຜູ້ອຳນວຍການ<br>ທ່ານ ເສິນ ອິງຈີ້ ຮອງຜູ້ອຳນວຍການ |
| **ສຳນັກງານ** | ໜ່ວຍ 15, ຖະໜົນລ້ານຊ້າງ<br>ບ້ານ ຫັດສະດີ<br>ເມືອງ ຈັນທະບູລີ<br>ນະຄອນຫຼວງວຽງຈັນ, ສປປ ລາວ |
| **ຜູ້ກວດສອບບັນຊີ** | ບໍລິສັດ ເຄພີເອັມຈີ ລາວ ຈຳກັດ<br>ຊັ້ນ 4, ຕຶກ ເຄພີ ທາວເວີ<br>ຖະໜົນ 23 ສິງຫາ<br>ຕູ້ ປ.ນ 6978<br>ນະຄອນຫຼວງວຽງຈັນ, ສປປ ລາວ |

**ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ບົດລາຍງານຖານະການເງິນ**

ຄະນະຜູ້ບໍລິຫານຂອງ ທະນາຄານ ອຸດສາຫະກໍາ ແລະ ການຄ້າຈີນ ຈໍາກັດ ສາຂາ ນະຄອນຫຼວງວຽງຈັນ ("ສາຂາ")ມີຄວາມຮັບຜິດຊອບຕໍ່ການກະກຽມບົດລາຍງານຖານະການເງິນທັງໝົດຂອງແຕ່ລະປີຢ່າງຖືກຕ້ອງຕາມຄວາມເປັນຈິງຂອງຖານະການເງິນໃນການດໍາເນີນງານຂອງທະນາຄານໃນສິ້ນປີ 31 ທັນວາ 2014 ແລະ ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍງານກະແສເງິນສົດທີ່ສອດຄ່ອງກັບລະບຽບການບັນຊີ ແລະ ຫຼັກການບັນຊີທົ່ວໄປທີ່ໄດ້ຮັບການຍອມຮັບ ໃນ ສປປ ລາວ. ໃນການກະກຽມບົດລາຍງານຖານະການເງິນເຫລົ່ານີ້, ຜູ້ບໍລິຫານຂອງທະນາຄານຕ້ອງໄດ້ປະຕິບັດດັ່ງນີ້:

i) ນໍາໃຊ້ຫຼັກການບັນຊີທີ່ເຫມາະສົມຢ່າງສົມເຫດສົມຜົນ, ມີການຕັດສິນ ແລະ ການຄາດຄະເນຢ່າງຮອບຄອບ ແລະ ນໍາມາປະຕິບັດຢ່າງຕໍ່ເນື່ອງ ;
ii) ປະຕິບັດຕາມຫຼັກການບັນຊີທົ່ວໄປທີ່ໄດ້ຮັບການຍອມຮັບ ໃນ ສປປ ລາວ ("ຫຼັກການບັນຊີລາວ") ແລະບົດແນະນໍາທີ່ອອກໃຫ້ໂດຍ ທະນາຄານແຫ່ງ ສປປ ລາວ, ໃນກໍລະນີ ຫາກມີຄວາມແຕກຕ່າງໄປຈາກຫລັກການດັ່ງກ່າວໃນການນໍາສະເຫນີຢ່າງຖືກຕ້ອງຕາມຄວາມເປັນຈິງທາງສາຂາຈະຕ້ອງແຈ້ງເປີດເຜີຍຂໍ້ມູນ, ອະທິບາຍໃຫ້ເຫດຜົນຕົວຈິງຢ່າງສົມເຫດສົມຜົນ ແລະ ຍອມຮັບການອອກຄວາມເຫັນແບບມີເງື່ອນໄຂໃນໃບລາຍງານຖານະການເງິນ;
iii) ເກັບຮັກສາເອກະສານທາງດ້ານການບັນທຶກບັນຊີຢ່າງຄົບຖ້ວນ ແລະ ມີລະບົບການຄຸ້ມຄອງພາຍໃນອົງກອນຢ່າງມີປະສິດທິພາບ ;
iv) ປະຕິບັດຂັ້ນຕອນທີ່ສົມເຫດສົມຜົນເພື່ອຄວາມປອດໄພຂອງຊັບສິນຂອງສາຂາ ແລະ ເພື່ອປົກປ້ອງ ແລະປ້ອງກັນການສໍ້ໂກງ, ຂໍ້ຜິດພາດ ແລະ ອື່ນໆ
v) ກະກຽມບົດລາຍງານຖານະການເງິນບົນພື້ນຖານການດໍາເນີນງານທີ່ຕໍ່ເນື່ອງຍົກເວັ້ນໃນກໍລະນີທີ່ທາງສາ ຂາຈະຄາດການມັນບໍ່ເໝາະສົມທີ່ທາງທະນາຄານຈະດໍາເນີນງານຕໍ່ໄປໃນອະນາຄົດ; ແລະ
vi) ຄຸ້ມຄອງ ແລະ ຊີ້ນໍາສາຂາຢ່າງມີປະສິດທິພາບມີສ່ ວນຮວ່ມໃນການຕັດສິນໃຈຕໍ່ບັນຫາສໍາຄັນທີ່ຈະມີຜົນກະທົບຕໍ່ການດໍາເນີນງານຂອງສາຂາ, ແລະ ຜົນງານ ແລະ ທາງທະນາຄານຄວນສະແດງໃຫ້ເຫັນວ່າຜົນ ຂອງການຕັດສິນໃຈດັ່ງກ່າວນັ້ນແມ່ນສາມາດເຫັນຜົນໄດ້ໃນບົດລາຍງານການເງິນຂອງສາຂາ.

ຄະນະບໍລິຫານຂໍຢັ້ງຢືນວ່າທາງຄະນະບໍລິຫານໄດ້ປະຕິບັດຕາມເງື່ອນໄຂທີ່ກ່າວມາຂ້າງເທິງຢ່າງຄົບຖ້ວນໃນການກະກຽມບົດລາຍງານຖານະການເງິນ.

**ການອະນຸມັດບົດລາຍງານຖານະການເງິນ**

ພວກຂ້າພະເຈົ້າ, ທ່ານ ລູ ຈຸ້ງນ ໂດຍຕາງໜ້າ ຄະນະຜູ້ບໍລິຫານ ຂໍກ່າວວ່າບົດລາຍງານຖານະການເງິນ ຈາກໜ້າ 5 ຫາ 67 ແມ່ນຖືກຕ້ອງຕາມຄວາມເປັນຈິງຂອງຖານະການເງິນການດຳເນີນງານຂອງ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນໃນສິ້ນປີ ວັນທີ 31 ທັນວາ 2014 ແລະ ຜົນໄດ້ຮັບຂອງການດຳເນີນງານ ແລະ ກະແສເງິນສົດຂອງທາງສາຂາທ້າຍປີແມ່ນໄດ້ຖືກສ້າງຂຶ້ນຕາມມາດຕະຖານລາຍງານຖານະການເງິນສາກົນ (“IFRS”).

ເຊັນຕາງໜ້າ ຄະນະບໍລິຫານ

ທ່ານ ລູ ຈຸ້ງນ
ຜູ້ອຳນວຍການ

ວັນທີ 26 ມີນາ 2015

3

**ການອະນຸມັດບົດລາຍງານຖານະການເງິນ**

ພວກຂ້າພະເຈົ້າ, ທ່ານ ລູ ຈ້ຽນໂດຍຕາງໜ້າ ຄະນະຜູ້ບໍລິຫານ ຂໍກ່າວວ່າບົດລາຍງານຖານະການເງິນ ຈາກໜ້າ 5 ຫາ 67 ແມ່ນຖືກຕ້ອງຕາມຄວາມເປັນຈິງຂອງຖານະການເງິນການດຳເນີນງານຂອງ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນໃນສິ້ນປີ ວັນທີ 31 ທັນວາ 2014 ແລະ ຜົນໄດ້ຮັບຂອງການດຳເນີນງານ ແລະ ກະແສເງິນສົດຂອງທາງສາຂາທ້າຍປີແມ່ນໄດ້ຖືກສ້າງຂຶ້ນຕາມມາດຕະຖານລາຍງານຖານະການເງິນສາກົນ (“IFRS”).

ເຊັນຕາງໜ້າ ຄະນະບໍລິຫານ

ທ່ານ ລູ ຈ້ຽນ
ຜູ້ອຳນວຍການ

ວັນທີ 26 ມີນາ 2015

**ບົດລາຍງານຂອງຜູ້ກວດສອບບັນຊີພາຍນອກ**
ເຖິງ: ຄະນະຜູ້ບໍລິຫານ ຂອງ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບບົດລາຍງານຖານະການເງິນຂອງ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ໃນວັນທີ 31 ທັນວາ 2014, ເຊິ່ງກ່ຽວຂ້ອງກັບໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະໃບລາຍງານກະແສເງິນສົດສຳລັບປີການສິ້ນສຸດບັນຊີ, ເຊິ່ງປະກອບດ້ວຍບົດສະຫລຸບນະໂຍບາຍການບັນຊີທີ່ສຳຄັນ ແລະ ໝາຍເຫດອະທິບາຍແບບເພີ່ມເຕີມອື່ນໆ. ສາຂາແມ່ນພາກສ່ວນໜຶ່ງຂອງທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ແລະ ບໍ່ແມ່ນພາກສ່ວນທີ່ແຍກດຳເນີນງານຕ່າງຫາກ. ບົດລາຍງານຖານະການເງິນ ແມ່ນໄດ້ຖືກກະກຽມຈາກບົດບັນທຶກຂອງສາຂາ ແລະ ສະແດງໃຫ້ເຫັນພຽງແຕ່ທຸລະກຳທີ່ເກີດຂຶ້ນພາຍໃນເທົ່ານັ້ນ.

ບົດລາຍງານຖານະການເງິນແມ່ນໄດ້ຖືກກະກຽມໂດຍຄະນະຜູ້ບໍລິຫານ ໂດຍນຳໃຊ້ພື້ນຖານຂອງການກະກຽມບົດລາຍງານຖານະການເງິນ ແລະ ນະໂຍບາຍທາງການບັນຊີຢູ່ໃນຂໍ້ສັງເກດທີ 2 ແລະ 3 ຂອງ ບົດລາຍງານຖານະການເງິນ.

***ຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ບົດລາຍງານຖານະການເງິນ***
ຜູ້ບໍລິຫານທະນາຄານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີບົດລາຍງານຖານະການເງິນທີ່ຖືກຕ້ອງຕາມມາດຕະຖານການລາຍງານການບັນຊີ ແລະ ການເງິນທີ່ຖືກຍອມຮັບໃນ ສປປ ລາວ, ແລະ ສຳລັບການຄວບຄຸມພາຍໃນເຊັ່ນການກຳນົດການຈັດການແມ່ນມີຄວາມຈຳເປັນເພື່ອໃຫ້ແນ່ໃຈວ່າການກະກຽມບົດລາຍງານຖານະການເງິນແມ່ນບໍ່ມີຂໍ້ຜິດພາດທີ່ເກີດຈາກການບິດເບືອນ, ສໍ້ໂກງ ຫລື ຂໍ້ຜິດພາດອື່ນໆ.

***ຄວາມຮັບຜິດຊອບຂອງຜູ້ກວດສອບ***
ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນ ການສະແດງຄຳຄິດເຫັນຕໍ່ບົດລາຍງານຖານະການເງິນດັ່ງກ່າວໂດຍອີງຕາມການກວດສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ດຳເນີນການກວດສອບຕາມມາດຕະຖານການກວດສອບສາກົນ. ບັນດາມາດຕະຖານດັ່ງກ່າວຮຽກຮ້ອງໃຫ້ພວກຂ້າພະເຈົ້າປະຕິບັດຕາມຄວາມຮຽກຮ້ອງຈັນຍາບັນ, ວາງແຜນ ແລະ ປະຕິບັດການກວດສອບເພື່ອໃຫ້ໄດ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າບົດລາຍງານຖານະການເງິນນີ້ແມ່ນປາສະຈາກຂໍ້ຜິດພາດ.

ການກວດສອບລວມມີຫຼາຍຂັ້ນຕອນໃນການປະຕິບັດ ເພື່ອເກັບກຳເອົາຫຼັກຖານການກວດສອບກ່ຽວກັບຈຳນວນ ແລະ
ການເປີດເຜີຍຢູ່ໃນບົດລາຍງານຖານະການເງິນ. ຂັ້ນຕອນໃນການຄັດເລືອກແມ່ນຂຶ້ນກັບການພິຈາລະນາ ຂອງຜູ້ກວດສອບ, ເຊິ່ງປະກອບດ້ວຍການປະເມີນຄວາມສ່ຽງຂອງຂໍ້ຜິດພາດທີ່ສຳຄັນຂອງບົດລາຍງານຖານະການເງິນວ່າເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ໃນການປະເມີນຄວາມສ່ຽງເຫຼົ່ານັ້ນພວກຂ້າພະເຈົ້າໄດ້ພິຈາລະນາກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວພັນກັບການກະກຽມ ແລະ ການນຳສະເໜີບົດລາຍງານຖານະການເງິນຂອງໜ່ວຍງານຢ່າງຖືກຕ້ອງ, ເພື່ອອອກແບບຂັ້ນຕອນການກວດສອບໃຫ້ເໝາະສົມກັບຕາຕະລາງ. ແຕ່ວ່າ

ພວກຂ້າພະເຈົ້າບໍ່ໄດ້ມີຈຸດປະສົງການສະແດງຄວາມຄິດເຫັນກ່ຽວກັບການຄວບຄຸມພາຍໃນຂອງໜ່ວຍງານໃຫ້ມີປະສິດທິພາບ. ການກວດສອບແມ່ນລວມທັງການປະເມີນຜົນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍທາງການບັນຊີ ແລະ ການປະເມີນທາງການບັນຊີຢ່າງສົມເຫດສົມຜົນໂດຍຄະນະຜູ້ບໍລິຫານ, ກໍ່ຄືການສະແດງການປະເມີນຜົນໂດຍລວມຂອງ ການກະກຽມບົດລາຍງານຖານະການເງິນ.

ພວກຂ້າພະເຈົ້າເຊື່ອໝັ້ນວ່າຫຼັກຖານໃນການກວດສອບທີ່ພວກຂ້າພະເຈົ້າໃຊ້ແມ່ນພຽງພໍ ແລະ ເໝາະສົມທີ່ຈະເປັນພື້ນຖານໃນການສະແດງຄວາມຄິດເຫັນຂອງພວກຂ້າພະເຈົ້າ.

***ຄວາມຄິດເຫັນຂອງຜູ້ກວດສອບ***

ໃນຄວາມຄິດເຫັນຂອງພວກຂ້າພະເຈົ້າບົດລາຍງານຖານະການເງິນແມ່ນສະແດງຢ່າງຍຸດຕິທຳ, ໃນສາລະສຳຄັນ, ບົດລາຍງານຖານະການເງິນຂອງ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ ວັນທີ 31 ທັນວາ 2014, ແລະ ການສະແດງຖານະການເງິນ ແລະ ການເຄື່ອນໄຫວຂອງກະແສເງິນສົດທ້າຍປີໂດຍສອດຄ່ອງຕາມມາດຕະຖານລາຍງານຖານະການເງິນສາກົນ .

__________________________

**ບໍລິສັດ ເຄພີເອັມຈີ ລາວ ຈຳກັດ**

**ນະຄອນຫຼວງວຽງຈັນ, ສປປ ລາວ**

ວັນທີ 26 ມີນາ 2015

**ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ**
**ໃບລາຍງານຖານະການເງິນ**
**ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2014**

| | ໝາຍເຫດ | 31 ທັນວາ 2014 ກີບ | 31 ທັນວາ 2013 ກີບ |
|---|---|---|---|
| **<u>ຊັບສິນ</u>** | | | |
| ເງິນສົດ | 5 | 42,316,021,926 | 18,572,855,821 |
| ເງິນຝາກລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | | |
| ເງິນຝາກກັບສຳນັກງານໃຫຍ່ ແລະ ສາຂາອື່ນ | 25(ກ) | 823,021,729,795 | 253,936,135,106 |
| ເງິນຝາກກັບທະນາຄານອື່ນ | 6 | 185,196,006,495 | 162,725,218,092 |
| ເງິນຝາກຕາມລະບຽບການກັບທະນາຄານກາງ | 7 | 152,782,618,180 | 139,119,849,416 |
| ເງິນລົງທຶນ | 8 | 2,007,778,916,691 | 1,567,696,000,000 |
| ເງິນກູ້ ແລະ ເງິນລ່ວງໜ້າ | 9 | 9,413,530,840,333 | 6,229,044,725,044 |
| ຕາສານສືບເນື່ອງຜະລິດຕະພັນການເງິນ | 10 | 544,632,534 | 900,885,258 |
| ອຸປະກອນ ແລະ ເຄື່ອງມື | 11 | 98,963,619,791 | 13,903,547,050 |
| ຊັບສິນທີ່ບໍ່ມີຕົວຕົນ | 12 | 50,833,151,564 | 51,448,216,349 |
| ຊັບສິນອື່ນໆ | 13 | 52,594,918,739 | 47,110,417,404 |
| **ລວມຍອດຊັບສິນ** | | **12,827,562,456,048** | **8,484,457,849,540** |

ພາກໝາຍເຫດໃບລາຍງານນີ້ແມ່ນສ່ວນທີ່ສຳຄັນຂອງບົດລາຍງານຖານະການເງິນ.

ກະກຽມໂດຍ: ອະນຸມັດໂດຍ:

ຝ່າຍບັນຊີ ຜູ້ອຳນວຍການ

**ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ**

**ໃບລາຍງານຖານະການເງິນ**

**ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2014**

| | | | |
|---|---|---|---|
| **ໜີ້ສິນ ແລະ ທຶນຂອງຜູ້ຖືຮຸ້ນ ແລະ ຄັງສຳຮອງອື່ນໆ** | | | |
| **ໜີ້ສິນ** | | | |
| ເງິນຝາກຈາກລູກຄ້າ | 14 | 2,067,816,247,512 | 990,478,055,529 |
| ເງິນຝາກລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | | |
| ເງິນຝາກຈາກສາຂາອື່ນ | 25(a) | 9,815,131,427,721 | 1,804,892,501,573 |
| | 15 | 25,710,930,457 | 66,490,247 |
| ເງິນຝາກຈາກທະນາຄານອື່ນ | 16,25 | 484,020,000,000 | 5,354,676,000,000 |
| ເງິນກູ້ຢືມ | 17 | 4,934,455,521 | 656,944,451 |
| ອາກອນຕ້ອງຈ່າຍ | | 516,215,677 | 7,506,321,526 |
| ໜີ້ສິນອື່ນໆ | 18 | 62,148,845,716 | 20,727,675,697 |
| **ລວມຍອດໜີ້ສິນ** | | **12,460,278,122,604** | **8,179,003,989,023** |
| **ທຶນຂອງສຳນັກງານໃຫຍ່** | | | |
| ທຶນຈົດທະບຽນຖອກແລ້ວ | 19(a) | 239,970,000,000 | 239,970,000,000 |
| ຄັງສຳຮອງຕາມລະບຽບການ | 19(b) | 12,568,659,697 | 4,173,694,285 |
| ກຳໄລສະສົມ | | 114,745,673,747 | 61,310,166,232 |
| **ລວມຍອດທຶນ ແລະ ຄັງສຳຮອງອື່ນ** | | **367,284,333,444** | **305,453,860,517** |
| **ລວມຍອດໜີ້ສິນ ແລະ ທຶນ ແລະ ຄັງສຳຮອງອື່ນ** | | **12,827,562,456,048** | **8,484,457,849,540** |

ພາກໝາຍເຫດໃບລາຍງານນີ້ແມ່ນສ່ວນທີ່ສຳຄັນຂອງບົດລາຍງານຖານະການເງິນ.

ກະກຽມໂດຍ: ອະນຸມັດໂດຍ:

ຝ່າຍບັນຊີ ຜູ້ອຳນວຍການ

## ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ
## ໃບລາຍງານຜົນໄດ້ຮັບ
## ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2014

| | ໝາຍເຫດ | 31 ທັນວາ 2014 ກີບ | 31 ທັນວາ 2013 ກີບ |
|---|---|---|---|
| **ລາຍຮັບຈາກດອກເບ້ຍ** | | | |
| ດອກເບ້ຍເງິນກູ້ ແລະ ເງິນລ່ວງໜ້າ | | 127,696,228,293 | 81,483,900,217 |
| ດອກເບ້ຍເງິນຝາກລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | 4,669,540,795 | 16,098,721,839 |
| ດອກເບ້ຍຈາກການລົງທຶນຊື້ພັນທະບັດ | | 94,328,547,803 | 77,472,184,512 |
| **ລວມລາຍຮັບດອກເບ້ຍ** | | **226,694,316,891** | **175,054,806,568** |
| **ລາຍຈ່າຍດອກເບ້ຍ** | | | |
| ດອກເບ້ຍເງິນຝາກ | | (3,080,495,004) | (3,375,819,685) |
| ດອກເບ້ຍເງິນຝາກລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | (69,473,752,857) | (49,345,883,416) |
| ດອກເບ້ຍການກູ້ຢືມ | | (42,279,245,862) | (34,964,871,078) |
| **ລວມລາຍຈ່າຍດອກເບ້ຍ** | 20 | **(114,833,493,723)** | **(87,686,574,179)** |
| **ລາຍຮັບສຸດທິດອກເບ້ຍ** | | **111,860,823,168** | **87,368,232,389** |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | | 6,132,916,210 | 5,559,027,798 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | | (918,150,067) | (481,414,536) |
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການສຸດທິ** | 21 | 5,214,766,143 | 5,077,613,262 |
| ເງິນແຮສຳລັບໜີ້ສູນ,ໜີ້ສົງໄສ ແລະ ເງິນລ່ວງໜ້າ | 9 | - | - |
| **ລາຍຮັບສຸດທິຈາກດອກເບ້ຍຫຼັງຈາກໜີ້ສົງໄສ ແລະ ໜີ້ສູນ** | | **117,075,589,311** | **92,445,845,651** |
| **ລາຍຮັບອື່ນໆ** | | | |
| ລາຍຮັບຈາກອັດຕາແລກປ່ຽນ | | 2,983,833,625 | 5,403,047,138 |
| ລາຍຮັບອື່ນໆ | | 6,362,224 | 1,129,545,468 |

| | | | |
|---|---|---|---|
| ລວມລາຍຮັບອື່ນໆ | | 2,990,195,849 | 6,532,592,606 |
| **ລາຍຮັບກ່ອນການຈ່າຍດອກເບ້ຍ ແລະ ຄິດໄລ່ອາກອນກຳໄລ** | | **120,065,785,160** | **98,978,438,257** |
| **ລາຍຈ່າຍດຳເນີນທຸລະກິດ** | | | |
| ລາຍຈ່າຍບຸກຄະລາກອນ | 22 | (23,055,810,388) | (17,504,804,692) |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | | (2,842,801,295) | (2,712,617,397) |
| **ລາຍຈ່າຍອື່ນໆ** | | (12,466,729,589) | (10,239,977,210) |
| **ລວມລາຍຈ່າຍດຳເນີນທຸລະກິດ** | | (38,365,341,272) | (30,457,399,299) |
| **ກຳໄລກ່ອນເສຍອາກອນກຳໄລ** | | **81,700,443,888** | **68,521,038,958** |
| ລາຍຈ່າຍທາງດ້ານອາກອນ | 23 | (19,869,970,961) | (18,234,759,404) |
| **ກຳໄລໃນປີ** | | **61,830,472,927** | **50,286,279,554** |
| **ລາຍຮັບອື່ນໆ** | | | |
| ລາຍຮັບອື່ນໆໃນປີ, ອາກອນສຸດທິ | | - | - |
| ລາຍຮັບອື່ນໆໃນປີ, ອາກອນສຸດທິທັງໝົດ | | **61,830,472,927** | **50,286,279,554** |

ພາກໝາຍເຫດໃບລາຍງານນີ້ແມ່ນສ່ວນທີ່ສຳຄັນຂອງບົດລາຍງານຖານະການເງິນ.

ກະກຽມໂດຍ: ອະນຸມັດໂດຍ:

ຝ່າຍບັນຊີ ຜູ້ອຳນວຍການ

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ
ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2014

| | ທຶນຈົດທະບຽນ ຖອກແລ້ວ<br>ກີບ | ກຳໄລ/ຂາດທຶນ ສະສົມ<br>ກີບ | ຄັງສຳຮອງຕາມລະບຽບການ<br>ກີບ | ລວມ<br>ກີບ |
|---|---|---|---|---|
| **ຍອດເຫຼືອບັນຊີ ໃນວັນທີ 1 ມັງກອນ 2013** | **239,970,000,000** | **14,143,189,472** | **1,054,391,491** | **255,167,580,963** |
| ກຳໄລໃນປີ | - | 50,286,279,554 | - | 50,286,279,554 |
| ຫັກເຂົ້າຄັງສະສົມຕາມລະບຽບການໃນປີ | - | (3,119,302,794) | 3,119,302,794 | - |
| **ຍອດເຫຼືອບັນຊີໃນວັນທີ 31 ທັນວາ 2013 ແລະ ວັນທີ 1 ມັງກອນ 2014** | **239,970,000,000** | **61,310,166,232** | **4,173,694,285** | **305,453,860,517** |
| ກຳໄລໃນປີ | - | 61,830,472,927 | - | 61,830,472,927 |
| ຫັກເຂົ້າຄັງສະສົມຕາມລະບຽບການໃນປີ | - | (8,394,965,412) | 8,394,965,412 | - |
| **ຍອດເຫຼືອບັນຊີໃນວັນທີ 31 ທັນວາ 2014** | **239,970,000,000** | **114,745,673,747** | **12,568,659,697** | **367,284,333,444** |

ພາກໝາຍເຫດໃບລາຍງານນີ້ແມ່ນສ່ວນທີ່ສຳຄັນຂອງບົດລາຍງານຖານະການເງິນ.

ກະກຽມໂດຍ: ອະນຸມັດໂດຍ:

ຝ່າຍບັນຊີ ຜູ້ອຳນວຍການ

## ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ
## ໃບລາຍງານດກະແສເງິນສົດ
## ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2014

| | ໝາຍເຫດ | 31 ທັນວາ 2014 ກີບ | 31 ທັນວາ 2013 ກີບ |
|---|---|---|---|
| **ກະແສເງິນສົດຈາກການດຳເນີນທຸລະກິດ** | | | |
| ກຳໄລຫຼັງຫັກອາກອນ | | 61,830,472,927 | 50,286,279,554 |
| *ການດັດປັບສຳລັບ:* | | | |
| ຄ່າເສື່ອມ ແລະ ຄ່າຫຼຸ້ຍຫ້ຽນຊັບສິນ | | 2,842,801,295 | 2,712,617,397 |
| ລາຍຮັບຈາກການລົງທຶນໃນພັນທະບັດ | | (94,328,547,803) | (77,472,184,512) |
| ລາຍຈ່າຍອາກອນກຳໄລ | | 19,869,970,961 | 18,234,759,404 |
| | | **(9,785,302,620)** | **(6,238,528,157)** |
| ການປ່ຽນແປງຊັບສິນ/ໜີ້ສິນຈາກການດຳເນີນງານ | | | |
| ການປ່ຽນແປງຂອງເງິນຝາກຕາມລະບຽບການ | | (13,662,768,764) | (48,229,903,398) |
| ການປ່ຽນແປງຂອງເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | (3,184,486,115,289) | (5,298,271,389,015) |
| ການປ່ຽນແປງຕາສານສືບເນື່ອງຜະລິດຕະພັນການເງິນ | | 356,252,724 | (900,885,258) |
| ການປ່ຽນແປງຂອງຊັບສິນອື່ນໆ ລວມທັງລາຍຮັບດອກເບ້ຍ ແລະ ເງິນລົງທຶນ | | (5,977,287,639) | (7,828,115,934) |
| ການປ່ຽນແປງຂອງເງິນຝາກຈາກລູກຄ້າ | | 1,077,338,191,983 | 404,330,730,929 |
| ການປ່ຽນແປງຂອງເງິນຝາກຈາກທະນາຄານອື່ນ | | 8,035,883,366,358 | 1,008,658,991,820 |
| ການປ່ຽນແປງຂອງອາກອນຕ້ອງຈ່າຍ | | (434,999,112) | 515,886,658 |
| ການປ່ຽນແປງຂອງໜີ້ສິນອື່ນໆ | | 41,421,170,019 | 1,256,524,438 |
| ລາຍຈ່າຍອາກອນກຳໄລ | | (22,147,566,628) | (11,297,703,945) |
| **ເງິນສົດສຸດທິທີ່ໃຊ້ເຂົ້າໃນການດຳເນີນທຸລະກິດ** | | **5,918,504,941,032** | **(3,958,004,391,862)** |
| **ກະແສເງິນສົດຈາກການລົງທຶນ** | | | |
| ການຄອບຄອງອຸປະກອນ ແລະ ເຄື່ອງມື | | (87,287,809,251) | (2,500,552,882) |
| ການຄອບຄອງຊັບສິນບັດທີ່ບໍ່ມີຕົວຕົນ | | - | (52,014,883,164) |
| ການຊື້ພັນທະບັດ | | (601,458,032,047) | (1,247,536,000,000) |
| ເງິນສົດຮັບຈາກການຂາຍ ແລະ | | 161,375,115,356 | 762,770,000,000 |

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ
ໃບລາຍງານດກະແສເງິນສົດ
ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2014

| | ໝາຍເຫດ | 31 ທັນວາ 2014 ກີບ | 31 ທັນວາ 2013 ກີບ |
|---|---|---|---|
| ການຖອນພັນທະບັດລົງທຶນ | | | |
| **ລາຍຮັບຈາກການລົງທຶນໃນພັນທະບັດ** | | 94,821,334,107 | 65,298,296,159 |
| **ເງິນສົດສຸດທິທີ່ໃຊ້ໃນການລົງທຶນ** | | **(432,549,391,835)** | **(473,983,139,887)** |
| **ກະແສເງິນສົດຈາກທຸລະກຳການເງິນ** | | | |
| ເງິນສົດທີ່ໄດ້ຮັບຈາກເງິນກູ້ | | 15,012,858,340,000 | 56,711,864,200,000 |
| ເງິນທີ່ຈ່າຍໃຫ້ເງິນກູ້ | | (19,883,514,340,000) | (52,157,284,220,000) |
| **ເງິນສົດສຸດທິຈາກທຸລະກຳການເງິນ** | | **(4,870,656,000,000)** | **4,554,579,980,000** |
| **ສຸດທິໃນກະແສເງິນສົດ ແລະ ທຽບເທົ່າເງິນສົດ** | | **615,299,549,197** | **122,592,448,251** |
| ເງິນສົດ ແລະ ທຽບເທົ່າເງິນສົດພາຍໃນວັນທີ 1 ມັງກອນ | | 435,234,209,019 | 312,641,760,768 |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນວັນທີ 31 ທັນວາ** | 24 | **1,050,533,758,216** | **435,234,209,019** |

ພາກໝາຍເຫດໃບລາຍງານນີ້ແມ່ນສ່ວນທີ່ສຳຄັນຂອງບົດລາຍງານຖານະການເງິນ.

ກະກຽມໂດຍ: ອະນຸມັດໂດຍ:

ຝ່າຍບັນຊີ ຜູ້ອຳນວຍການ

## 1 ຂໍ້ມູນທົ່ວໄປ ແລະ ກິດຈະກຳຫຼັກ

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ເປັນສາຂາ ຂອງທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ, ທີ່ພວມດຳເນີນທຸລະກິດຢູ່ໃນປະເທດ ສປ ຈີນ ເຊິ່ງມີສາຂາຕັ້ງຢູ່ ໜ່ວຍ 15, ຖະໜົນ ລ້ານຊ້າງ, ບ້ານ ຫັດສະດີ, ເມືອງຈັນທະບູລີ , ນະຄອນຫຼວງວຽງຈັນ ທີ່ດຳເນີນທຸລະກິດ ຢູ່ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ສາຂາໄດ້ເລີ່ມ ດຳເນີນທຸລະກິດໃນວັນທີ 28 ພະຈິກ 2011 ອີງຕາມໃບອະນຸຍາດລົງທຶນເລກທີ 180-11/ຜທ/ລທ3 ລົງວັນທີ 2 ສິງຫາ 2011. ເຊິ່ງໄດ້ຮັບການອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ("ທຫລ"), ໃຫ້ດຳເນີນທຸລະກິດ ທະນາຄານເລກທີ 16/ທຫລ, ລົງວັນທີ 25 ສິງຫາ 2011 ແລະ ໄດ້ມີການປ່ຽນແປງໃບ ອະນຸຍາດດຳເນີນ ກິດຈະການທະນາຄານໃນເດືອນ ກຸມພາ 2013. ສາຂາແມ່ນພາກສ່ວນໜຶ່ງຂອງ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ແລະ ບໍ່ແມ່ນພາກສ່ວນທີ່ແຍກດຳເນີນງານຕ່າງຫາກ. ບົດລາຍງານຖານະການເງິນແມ່ນ ໄດ້ຖືກກະກຽມຈາກບົດບັນທຶກຂອງສາຂາ ແລະ ສະແດງໃຫ້ເຫັນພຽງ ແຕ່ທຸລະກຳທີ່ເກີດຂຶ້ນພາຍໃນເທົ່ານັ້ນ. ສາຂາມີທຸລະກຳ ແລະ ຍອດເຫຼືອສຳຄັນກັບສຳນັກງານໃຫຍ່ ແລະ ບັນດາສາຂາອື່ນໆ.

ການບໍລິການຫຼັກຂອງສາຂາ ແມ່ນເພື່ອໃຫ້ບໍລິການທາງດ້ານການເງິນ, ການຄ້າ ແລະ ໃຫ້ບໍລິການດ້ານ ທະນາຄານແກ່ນັກລົງທຶນຄົນລາວ, ຈີນ ແລະ ໄທ ແລະ ໃຫ້ບໍລິການດ້ານທະນາຄານແກ່ບຸກຄົນທົ່ວໄປ.

ວັນທີ 31 ທັນວາ 2014, ສາຂາມີພະນັກງານທັງໝົດ 56 ຄົນ (2013: 53 ຄົນ)
ອີງຕາມແຈ້ງການຂອງທະນາຄານແຫ່ງ ສປປ ລາວ ເລກທີ 338/ທຫລ, ລົງວັນທີ 13 ກັນຍາ 2012 ຮຽກຮ້ອງທະນາຄານແຍກການກະກຽມບົດລາຍງານທາງດ້ານການເງິນຂອງຕົນອີງຕາມມາດຕະຖານລາຍ ງານການເງິນສາກົນ("IFRS"). ສາຂາຕ້ອງກະກຽມບົດລາຍງານຖານະການເງິນຂອງຕົນໃຫ້ສອດຄ່ອງກັບ ກົດລະບຽບ ແລະ ນະໂຍບາຍທາງດ້ານການບັນຊີຂອງທະນາຄານແຫ່ງ ສປປ ລາວ. ດັ່ງນັ້ນ, ສາຂາຈິ່ງ ຕ້ອງມີບົດລາຍງານຖານະ ການເງິນ 2 ປະເພດດັ່ງລຸ່ມນີ້ :

1. ອີງຕາມກົດລະບຽບຂອງທະນາຄານແຫ່ງ ສປປ ລາວ ແລະ ນະໂຍບາຍທາງດ້ານບັນຊີຂອງ ສາຂາ ("ການປະຕິບັດຂອງລາວ")
2. ອີງຕາມມາດຕະຖານລາຍງານ ການເງິນສາກົນ ("IFRS").

ບົດລາຍງານຖານະການເງິນຂອງສາຂາໄດ້ອີງຕາມຫຼັກການປະຕິບັດຂອງລາວ ແລະ ໄດ້ຮັບການອະນຸມັດ ຈາກຄະນະຜູ້ບໍລິຫານໃນຄັ້ງວັນທີ ວັນທີ 26 ມີນາ 2015.

## 2 ພື້ນຖານຂອງການກະກຽມບົດລາຍງານຖານະການເງິນ

### (i) ພື້ນຖານໃນການກະກຽມ

ບົດລາຍງານຖານະການເງິນໄດ້ຖືກກະກຽມໂດຍອີງຕາມການລາຍງານຕາມມາດຕະຖານການລາຍງານຖານະການເງິນແບບສາກົນ (IFRS), ບົດລາຍງານຖານະການເງິນນີ້ແມ່ນໄດ້ຖືກອະນຸຍາດໃຫ້ສ້າງຂື້ນໂດຍຄະນະຜູ້ບໍລິຫານ ວັນທີ 26 ມີນາ2015..

### (ii) ພື້ນຖານການປະເມີນ

ບົດລາຍງານຖານະການເງິນແມ່ນໄດ້ກະກຽມຂື້ນຕາມຫຼັກການຕົ້ນທຶນເດີມດັ່ງທີ່ໄດ້ກ່າວໄວ້ໃນນະໂຍບາຍການບັນຊີ. ນະໂຍບາຍການບັນຊີດັ່ງກ່າວແມ່ນໄດ້ຖືກນຳໃຊ້ຢ່າງສອດຄ່ອງກັບສາຂາ ແລະ ສອດຄ່ອງກັບຫຼັກການທີ່ໄດ້ນຳໃຊ້ໃນປີຜ່ານມາ.

### (iii) ສະກຸນເງິນຫຼັກ ແລະ ການສະແດງສະກຸນເງິນ

ບົດລາຍງານຖານະການເງິນສະບັບນີ້ແມ່ນຖືກສະແດງເປັນສະກຸນເງິນກີບ (ກີບ), ເຊິ່ງເປັນສະກຸນເງິນຫຼັກ ຂອງສາຂາ.

### (iv) ການນຳໃຊ້ການປະເມີນ ແລະ ການພິຈາລະນາທາງບັນຊີ

ໃນການກະກຽມບົດລາຍງານຖານະການເງິນໃຫ້ສອດຄ່ອງກັບ IFRS ຂອງສາຂາ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງມີການພິຈາລະນາ, ການຄາດຄະເນ ແລະ ສົມມຸດຕິຖານຕາມການຈັດການຕໍ່ສະພາບປະຈຸບັນ ແລະ ການປະຕິບັດທີ່ມີຜົນກະທົບຕໍ່ການນຳໃຊ້ນະໂຍບາຍການບັນຊີ ແລະ ການລາຍງານມູນຄ່າ ຂອງຊັບສິນ, ໜີ້ສິນ, ລາຍຮັບ, ລາຍຈ່າຍ ແລະການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນໃນວັນທີ່ລາຍງານ.
ການຄາດຄະເນ ແລະ ການສົມມຸດຖານແມ່ນໄດ້ຖືກທົບທວນຄືນຢ່າງຕໍ່ເນື່ອງ. ຜົນໄດ້ຮັບທີ່ແທ້ຈິງອາດຈະແຕກຕ່າງຈາກການປະເມີນຂອງການບໍລິຫານ ແລະ ສ່ວນແຕກຕ່າງເຫຼົ່ານັ້ນອາດຈະຈຳເປັນທີ່ຈະຕ້ອງມີການແກ້ໄຂທີ່ໃຫ້ເປັນທີ່ຍອມຮັບໃນໄລຍະທີ່ການປະເມີນຖືກມີການແກ້ໄຂ ແລະ ໃນໄລຍະທີ່ຈະໄດ້ຮັບຜົນກະທົບໃນອະນາຄົດ.

### (v) ປີການບັນຊີ

ປີການບັນຊີຂອງສາຂາແມ່ນເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ

### (vi) ການປ່ຽນແປງນະໂຍບາຍທາງດ້ານການບັນຊີ

IASB ໄດ້ອອກການດັດແກ້ IFRSs (ລວມທັງມາດຕະຖານການບັນຊີສາກົນ (“IASs”)) ແລະ ການດັດແກ້ມາດຕະຖານດັ່ງກ່າວມີຜົນນຳໃຊ້ໃນປີ 2014 ແລະ ກ່ຽວຂ້ອງກັບການດຳເນີນທຸລະກິດຂອງສາຂາ.

2. ພື້ນຖານຂອງການກະກຽມບົດລາຍງານຖານະການເງິນ(ຕໍ່)

**(vi) ການປ່ຽນແປງນະໂຍບາຍທາງດ້ານການບັນຊີ(ຕໍ່)**

ການດັດແກ້ IAS 32 *ເຄື່ອງມືທາງດ້ານການເງິນ: ການນໍາສະເໜີ-ການຫັກລົບຊັບສິນທາງການເງິນ ແລະ ໜີ້ສິນທາງດ້ານການເງິນ.*

ຫຼັກການດັ່ງກ່າວແມ່ນມີຜົນກະທົບຂອງການຍອມຮັບ IFRSs ອັນໃໝ່ ແລະ ໄດ້ດັດແກ້ ມີດັ່ງລຸ່ມນີ້:

*ການດັດແກ້ ຂອງ IAS 32 - ເຄື່ອງມືທາງການເງິນ: ການນໍາສະເໜີ - ການຫັກລົບຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນ.*

ການດັດແກ້ ຂອງ IAS 32 ແມ່ນອະທິບາຍເງື່ອນໄຂຂອງການຫັກລົບໃນ IAS 32. ການດັດແກ້ຂອງ IAS 32 ຊີ້ແຈງຄວາມໝາຍຂອງຄໍາວ່າ : "ປັດຈຸບັນມີສິດທິທາງກົດໝາຍເພື່ອຈະປິດ" ການຍອມຮັບດັ່ງກ່າວນີ້ບໍ່ໄດ້ສົ່ງຜົນກະທົບຮ້າຍແຮງຕໍ່ກັບບົດລາຍງານການເງິນຂອງສາຂາ.

3. **ສັງລວມນະໂຍບາຍການບັນຊີທີ່ເປັນສາລະສໍາຄັນຕ່າງໆ**

ນະໂຍບາຍບັນຊີທີ່ເປັນສາລະສໍາຄັນດັ່ງລຸ່ມນີ້ ແມ່ນສາຂາໄດ້ນໍາໃຊ້ໃນການກະກຽມບົດລາຍງານຖານະການເງິນ.

**(ກ) ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດ**

ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດແມ່ນໄດ້ ຖືກປ່ຽນເປັນສະກຸນເງິນກີບໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເຄື່ອນໄຫວດັ່ງກ່າວເກີດຂຶ້ນ.

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດທີ່ເປັນສະກຸນເງິນຕາຕ່າງປະເທດໃນມື້ລາຍງານແມ່ນໄດ້ແປງຄ່າເປັນສະກຸນເງິນກີບໃນມື້ທີ່ລາຍການເຄື່ອນໄຫວດັ່ງກ່າວເກີດຂຶ້ນ. ສ່ວນແຕກຕ່າງຂອງອັດຕາແລກປ່ຽນທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ແມ່ນໄດ້ຖືກນໍາມາສະເໜີໃນໃບລາຍງານຜົນໄດ້ຮັບ.

ອັດຕາແລກປ່ຽນລະຫວ່າງເງິນກີບ ແລະ ເງິນຕາຕ່າງປະເທດມີຄື:

| | **ວັນທີ 31 ທັນວາ 2014** | **ວັນທີ 31 ທັນວາ 2013** |
|---|---|---|
| | **ກີບ** | **ກີບ** |
| ເງິນໂດລາ | 8,067.00 | 8,004.00 |
| ເງິນບາດ | 246.48 | 244.82 |
| ເງິນຢວນ | 1,289.11 | 1,311.53 |
| ເງິນຢູໂລ | 9,787.00 | 11,045.00 |

3. ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ(ຕໍ່)

(ຂ) ຊັບສິນ ແລະ ໜີ້ສິນທາງການເງິນ

(i) ການຮັບຮູ້

ສາຂາຈະຮັບຮູ້ເບື້ອງຕົ້ນກ່ຽວກັບເງິນກູ້ຢືມ ແລະ ເງິນລ່ວງໜ້າ, ເງິນຝາກ ແລະ ເງິນກູ້ໃນມື້ເລີ່ມຕົ້ນ. ວິທີການຊື້ ແລະ ຂາຍຊັບສິນບັດທາງການເງິນໂດຍທົ່ວໄປແມ່ນຮັບຮູ້ຕາມວັນທີ່ຊື້ຂາຍເຊິ່ງສາຂາມີຄວາມຕັ້ງໃຈທີ່ຈະຊື້ ຫຼື ຂາຍຊັບສິນເຫຼົ່ານັ້ນ. ສຳລັບຊັບສິນ ແລະ ໜີ້ສິນທາງການເງິນອື່ນໆ (ລວມທັງຊັບສິນ ແລະ ໜີ້ສິນຕີມູນຄ່າຕາມມູນຄ່າຍຸດຕິທຳຈາກຜົນກຳໄລ ຫຼື ຂາດທຶນ) ແມ່ນຖືກຮັບຮູ້ໃນເບື້ອງຕົ້ນຕາມມື້ຊື້ຂາຍ, ເຊິ່ງເປັນວັນທີ່ສາຂາກາຍເປັນຄູ່ສັນຍາຂອງຂໍ້ກຳນົດຂອງສັນຍາ.

ຊັບສິນບັດທາງການເງິນ ຫຼື ໜີ້ສິນທາງການເງິນໄດ້ຖືກວັດແທກໃນເບື້ອງຕົ້ນຕາມມູນຄ່າຍຸດຕິທຳບວກ, ທີ່ບໍ່ແມ່ນລາຍການຕາມມູນຄ່າຍຸດຕິທຳຈາກຜົນກຳໄລ ຫຼື ຂາດທຶນ, ລາຍການຕົ້ນທຶນຈະແມ່ນຄຸນລັກສະນະໂດຍກົງຂອງການໄດ້ຮັບ ຫຼື ບັນຫາ.

(ii) ການແຍກປະເພດ

**ຊັບສິນທາງການເງິນ**

ສາຂາຈັດແຍກຊັບສິນທາງການເງິນຂອງຕົນຕາມຊັບສິນທາງການເງິນແຕ່ລະປະເພດດັ່ງຕໍ່ໄປນີ້:

- ເງິນກູ້ ແລະ ລາຍຮັບ; ແລະ
- ການຖືຄອງຕາມກຳນົດ;
- ຕາມມູນຄ່າຍຸດຕິທຳຜ່ານກຳໄລ ຫຼື ຂາດທຶນຕາມທີ່ຫັກໄວ້ເພື່ອການຄ້າ.

**ໜີ້ສິນທາງການເງິນ**

ສາຂາຈັດແຍກໜີ້ສິນທາງການເງິນຂອງຕົນ, ນອກເໜືອຈາກການຄ້ຳປະກັນທາງການເງິນ ແລະ ພາລະຜູກພັນທາງການເງິນຕາມການວັດແທກຄ່າເສື່ອມມູນຄ່າ.

(iii) ການບໍ່ຮັບຮູ້

**ຊັບສິນທາງການເງິນ**

ສາຂາຈັດການລຶບລ້າງການຮັບຮູ້ຊັບສິນບັດທາງການເງິນ ເມື່ອສິດທິຕາມສັນຍາທີ່ສ້າງກະແສເງິນສົດຈາກຊັບສິນດັ່ງກ່າວໝົດອາຍຸ ຫຼື ມີການໂອນສິດຖືຄອງຕາມສັນຍາກະແສເງິນສົດໃນທຸລະກຳທີ່ຄວາມສ່ຽງທັງໝົດ ແລະ ຄວາມເປັນເຈົ້າຂອງຊັບສິນທາງການເງິນນັ້ນຖືກໂອນ ຫຼືວ່າສາຂາຈະໂອນ ຫຼື ຮັບເອົາຄວາມສ່ຽງທັງໝົດ ແລະ ສາຂານັ້ນບໍ່ສາມາດຮັກສາການຄວບຄຸມຂອງຊັບສິນທາງການເງິນໄດ້. ດອກເບ້ຍຂອງການໂອນຊັບສິນທາງການເງິນດັ່ງກ່າວທີ່ມີຄຸນສົມບັດໃນການລຶບລ້າງອອກຈະຖືກສ້າງຂຶ້ນ ຫຼື ຖືກເກັບຮັກສາໂດຍສາຂານັ້ນຈະຖືວ່າເປັນຊັບສິນ ຫຼື ໜີ້ສິນທີ່ແຍກອອກ. ໃນການລຶບລ້າງ

**3. ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ (ຕໍ່)**

**(ຂ) ຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)**

**(iii) ການບໍ່ຮັບຮູ້ (ຕໍ່)**

ຊັບສິນທາງການເງິນນີ້, ຄວາມແຕກຕ່າງລະຫວ່າງຈຳນວນຂອງຊັບສິນທີ່ໂອນ (ຫຼືມູນຄ່າຕາມບັນຊີທີ່ຈັດສັນໃຫ້ເປັນສ່ວນໜຶ່ງຂອງຊັບສິນທີ່ໂອນນັ້ນ) ແລະ ຜົນລວມຂອງ (i) ການພິຈາລະນາການໄດ້ຮັບ (ລວມທັງຊັບສິນໃໝ່ທີ່ມີມູນຄ່າໜ້ອຍກວ່າໜີ້ສິນໃໝ່ທີ່ຄາດຄະເນໄວ້) ແລະ (ii) ກຳໄລ ຫຼື ຂາດທຶນສະສົມທີ່ໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບຈະຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ.

ໃນການດຳເນີນທຸລະກິດ, ບໍ່ວ່າສາຂາຈະຮັກສາຄວາມສ່ຽງ ຫຼື ຄວາມເປັນເຈົ້າຂອງຂອງຊັບສິນທາງການເງິນ ແລະ ຮັກສາການຄວບຄຸມຂອງຊັບສົມບັດ, ສາຂາຈະມີສ່ວນຮ່ວມໃນການສືບຕໍ່ຂະຫຍາຍ, ກຳນົດ ການຂະຫຍາຍໂດຍຂອບເຂດທີ່ມີການສຳພັດການປ່ຽນແປງໃນມູນຄ່າຂອງຊັບສິນທີ່ໄດ້ໂອນ.

ສາຂາຈັດລົບລ້າງການຮັບຮູ້ໜີ້ສິນທາງການເງິນເມື່ອສັນຍາຖືກປ່ອຍອອກ, ຖືກຍົກເລີກ ຫຼື ໝົດອາຍຸ.

**(iv) ການລົບລ້າງ**

ຊັບສິນ ແລະ ໜີ້ສິນທາງການເງິນແມ່ນຖືກຊົດເຊີຍຕາມມູນຄ່າສຸດທິທີ່ສະແດງໃນໃບສະຫຼຸບຖານະທາງການເງິນ, ເມື່ອສາຂາມີສິດທາງກົດໝາຍທີ່ຈະລົບລ້າງອອກ ແລະ ຕັ້ງໃຈຊຳລະໜີ້ສິນດັ່ງກ່າວຕາມມູນຄ່າພື້ນຖານ ຫຼື ຈະຮັບຮູ້ຊັບສິນ ແລະ ລົບລ້າງໜີ້ສິນໄປພ້ອມໆກັນ.

ລາຍຮັບ ແລະ ລາຍຈ່າຍ ແມ່ນນຳສະເໜີຕາມມູນຄ່າພື້ນຖານແມ່ນໄດ້ຮັບອະນຸຍາດຕາມຫຼັກການ ຂອງ IFRSs.

**(v) ການວັດແທກຕົ້ນທຶນຄ່າເສື່ອມ**

ຕົ້ນທຶນຄ່າເສື່ອມ ຫຼື ໜີ້ສິນທາງການເງິນແມ່ນມູນຄ່າໜີ້ສິນ ຫຼື ຊັບສິນທາງການເງິນດັ່ງກ່າວຖືກວັດແທກໃນການຮັບຮູ້ເບື້ອງຕົ້ນ, ຫັກລົບພື້ນຖານການຊຳລະຄືນ, ການເພີ່ມ ຫຼື ຫັກລົບຄ່າເສື່ອມສະສົມໂດຍນຳໃຊ້ວິທີຄິດໄລ່ແບບດອກເບ້ຍແບບມີປະສິດທິພາບຂອງຄວາມແຕກຕ່າງລະຫວ່າງຈຳນວນເບື້ອງຕົ້ນທີ່ໄດ້ຮັບຮູ້ ແລະ ຈຳນວນທີ່ຄົບກຳນົດລົບໃຫ້ການຫຼຸດລົງຈາກການຫັກຄ່າຫຼຸ້ຍຫ້ຽນ.

**(vi) ການວັດແທກຕາມມູນຄ່າຍຸດຕິທຳ**

ມູນຄ່າຍຸດຕິທຳແມ່ນມູນຄ່າທີ່ຈະໄດ້ຮັບຈາກການແລກປ່ຽນຊັບສົມບັດ ຫຼື ໜີ້ສິນທີ່ຖືກຊຳລະລະຫວ່າງການຮັບຮູ້ ແລະ ຕັ້ງໃຈຂອງພາກສ່ວນທີ່ກ່ຽວຂ້ອງໃນວັນທີຕາມລາຄາຂອງມູນຄ່ານັ້ນ.

ຖ້າຕະຫຼາດເຄື່ອງມືທາງການເງິນບໍ່ຕື່ນຕົວ, ສາຂາສາມາດຕັ້ງຄ່າຍຸດ ຕິທຳໄດ້ໂດຍນຳໃຊ້ເຕັກນິກການປະເມີນຄ່າ. ເຕັກນິກການປະເມີນຄ່າປະກອບດ້ວຍການນຳໃຊ້ການວິເຄາະກະແສເງິນສົດ. ເຕັກນິກ

**3. ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ (ຕໍ່)**

(ຂ) ຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)

ການປະເມີນຄ່າທີ່ຖືກເລືອກຈະສ້າງຄວາມຄິດເຫັນຕໍ່ຕະຫຼາດໄດ້ຫຼາຍທີ່ສຸດ ແລະ ໜ້າເຊື່ອຖືຕາມການປະເມີນຄ່າທີ່ເຈາະຈົງຕໍ່ສາຂາ, ການລວບລວມເອົາປັດໄຈທັງໝົດຂອງຕະຫຼາດເພື່ອທີ່ຈະເອົາມາຕັ້ງມູນຄ່າ ແລະ ເພື່ອໃຫ້ມີຄວາມສອດຄ່ອງກັບຫຼັກການທີ່ຍອມຮັບຂອງຫຼັກການເສດຖະສາດສຳລັບການຕັ້ງມູນຄ່າຂອງເຄື່ອງມືທາງການເງິນ.ປັດໄຈເຕັກນິກການປະເມີນຄ່າທີ່ສົມເຫດສົມຜົນຈະສະແດງຄວາມຄາດຫວັງຂອງຕະຫຼາດ ແລະ ວັດແທກປັດໄຈທີ່ມີຄວາມສ່ຽງກັບຄືນສູ່ເຄື່ອງມືທາງການ ເງິນ.

**(vii) ການລະບຸ ແລະ ການວັດແທກຕາມການເສື່ອມມູນຄ່າ.**

ໃນທຸກໆມື້ຂອງການລາຍງານ, ສາຂາຈະປະເມີນວ່າມີຫຼັກຖານທີ່ເປັນຮູບປະທຳທີ່ຊັບສິນບັດທາງການເງິນນັ້ນບໍ່ໄດ້ດຳເນີນຕາມມູນຄ່າຍຸດຕິທຳ, ຜ່ານຜົນກຳໄລ ຫຼື ຂາດທຶນທີ່ໄດ້ຫັກຄ່າເສື່ອມ. ຊັບສິນທາງການເງິນ ຫຼື ກຸ່ມຂອງຊັບສິນທາງການເງິນທີ່ຖືກຫັກຄ່າເສື່ອມຖ້າວ່າຫຼັກຖານສະແດງໃຫ້ເຫັນວ່າມີການ ຂາດທຶນໄດ້ປະກົດຂຶ້ນຫຼັງການຮັບຮູ້ເບື້ອງຂອງຊັບສິນ ແລະ ການຂາດທຶນນັ້ນມີຜົນກະທົບຕໍ່ກະແສ ເງິນຂອງຊັບສິນໃນອະນາຄົດ ແລະ ສາມາດປະເມີນຄ່າໄດ້.

ຫຼັກຖານທີ່ເປັນຮູບປະທຳຂອງຊັບສິນ ທາງການເງິນທີ່ຖືກຫັກຄ່າເສື່ອມນັ້ນປະກອບດ້ວຍຄວາມຫຍຸ້ງ ຍາກທາງການເງິນທີ່ສຳຄັນຂອງຜູ້ກູ້ຢືມ ຫຼື ຜູ້ໃຫ້ຢືມ, ການລະເລີຍ ຫຼື ການກະທຳຜິດຂອງຜູ້ກູ້ຢືມ, ການປັບປຸງເງິນກູ້ຢືມ ຫຼື ການຈ່າຍລ່ວງໜ້າຂອງສາຂາຕາມເງື່ອນໄຂທີ່ສາຂານັ້ນອາດຈະບໍ່ພິຈາລະ ນາ, ເຊິ່ງສະແດງວ່າຜູ້ກູ້ຢືມ ຫຼື ຜູ້ໃຫ້ຢືມອາດມີແນວໂນ້ມທີ່ຈະລົ້ມລະລາຍໄດ້. ການຫາຍຕົວໄປຂອງ ຕະຫຼາດທີ່ມີຄວາມປອດໄພ ຫຼື ຂໍ້ມູນອື່ນໆທີ່ກ່ຽວຂ້ອງກັບກຸ່ມຂອງຊັບສິນເຊັ່ນວ່າ: ການປ່ຽນແປງທີ່ເປັນໄພຂອງສະຖານະພາບໃນການຈ່າຍຂອງຜູ້ກູ້ຢືມ ຫຼື ຜູ້ໃຫ້ກູ້ຢືມໃນກຸ່ມ, ຫຼື ເງື່ອນໄຂເສດຖະກິດທີ່ກ່ຽວພັນກັບການຜິດສັນຍາໃນກຸ່ມ.

ສາຂາຈະພິຈາລະນາຫຼັກຖານຂອງການເສື່ອມສຳລັບເງິນກູ້,ເງິນລ່ວງໜ້າ ແລະ ເງິນລົງທຶນທີ່ຄືບກຳນົດລວມທັງຊັບສິນທີ່ເຈາະຈົງ ແລະ ຊັບສິນໂດຍລວມ. ເງິນກູ້ຢືມສ່ວນຕົວທີ່ມີຂະໜາດໃຫຍ່ ແລະ ເງິນລ່ວງໜ້າ ແລະ ເງິນລົງທຶນຫຼັກຊັບທີ່ຄືບກຳນົດຈະຖືກປະເມີນຕາມຄ່າເສື່ອມທີ່ເຈາະຈົງໄວ້. ສຳລັບຊັບສິນທີ່ພົບເຫັນວ່າບໍ່ມີຄ່າເສື່ອມສະເພາະເຈາະຈົງແມ່ນຈະຖືກປະເມີນຄ່າໂດຍລວມເມື່ອມີຄ່າເສື່ອມເກີດຂຶ້ນແຕ່ຍັງບໍ່ສາມາດລະບຸໄດ້. ເງິນກູ້, ເງິນລ່ວງໜ້າ ແລະ ເງິນລົງທຶນຫຼັກຊັບທີ່ມີລັກສະນະຄວາມສ່ຽງທີ່ຄ້າຍຄືກັນ.

ການເສື່ອມຂອງຊັບສິນນັ້ນຈະວັດແທກເຂົ້າໃນການລົບລ້າງຕົ້ນທຶນເຊິ່ງຈະຖືກຄິດໄລ່ເຖິງຄວາມແຕກຕ່າງລະຫວ່າງມູນຄ່າທີ່ຫັກອອກຈາກຄ່າຫຼຸ້ຍຫ້ຽນຂອງຊັບສິນ ແລະ ມູນຄ່າປະຈຸບັນຂອງການປະເມີນຜົນກະແສເງິນສົດອະນາຄົດທີ່ຫຼຸດລົງ, ເມື່ອຊັບສິນດັ່ງກ່າວສົ່ງຜົນກະທົບຕໍ່ອັດຕາດອກເບ້ຍ.

## 3. ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ (ຕໍ່)

### (ຂ) ຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)

ການຂາດທຶນຈາກຄ່າເສື່ອມທີ່ຮັບຮູ້ໃນກຳໄລ ຫຼື ຂາດທຶນ ແລະ ການສະທ້ອນໃນ ບັນຊີເງິນລ່ວງໜ້າກົງກັນຂ້າມກັບເງິນກູ້ຢືມ ແລະ ເງິນລ່ວງໜ້າ ຫຼື ເງິນລົງທຶນຄົບກຳນົດ. ດອກເບ້ຍຈາກການຫັກຄ່າເສື່ອມຊັບສິນສືບຕໍ່ຮັບຮູ້ຜ່ານການຫຼຸດລາຄາ. ເມື່ອເຫດການເຫຼົ່ານັ້ນເກີດຂຶ້ນຫຼັງຈາກການຫັກຄ່າເສື່ອມຖືກຮັບຮູ້ເຊິ່ງເປັນສາເຫດໃຫ້ຈຳນວນການຫັກຄ່າເສື່ອມຂາດທຶນຫຼຸດລົງ, ການຫຼຸດລົງໃນການຫັກຄ່າເສື່ອມຂາດທຶນຖືກຮັບຮູ້ຜ່ານກຳໄລ ຫຼື ຂາດທຶນ.

ສາຂາຈະລຶບລ້າງເງິນກູ້ ແລະ ເງິນລ່ວງໜ້າ ແລະ ເງິນລົງທຶນຫຼັກຊັບເມື່ອຖືກກຳນົດໃຫ້ເປັນການເງິນທຶນທີ່ບໍ່ສາມາດຮຽກເກັບດອກເບ້ຍໄດ້;

### (ຄ) ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດປະກອບມີເງິນສົດແລະຍອດຍັງເຫລືອກັບທະນາຄານອື່ນ, ເງິນຝາກກະແສລາຍວັນ, ແລະ ເງິນລົງທຶນໄລຍະສັ້ນທີ່ມີກຳນົດ ສາມ ເດືອນ ຫລື ໜ້ອຍກ່ວາ ສາມເດືອນ, ແລະ ສາມາດປ່ຽນເປັນເງິນໄດ້ ແລະ ມີຄວາມສ່ຽງໃນການປ່ຽນຄ່າໜ້ອຍ.

### (ງ) ການລົງທຶນ

#### ການຖືຄອງຕາມອາຍຸການ

ການລົງທຶນທີ່ຖືຄອງຕາມອາຍຸການແມ່ນຊັບສິນທີ່ບໍ່ແມ່ນຕາສານສືບເນື່ອງຄົງທີ່ ຫຼື ການກຳນົດການຈ່າຍ ແລະ ການຄົບກຳນົດຄົງທີ່ສາຂາມີຄວາມຕັ້ງໃຈ ແລະ ສາມາດຖືຄອງໄດ້ຈົນຄົບກຳນົດ ແລະ ເປັນຊັບສິນທີ່ບໍ່ຖືກຕີລາຄາຕາມມູນຄ່າຍຸດຕິທຳຜ່ານກຳໄລ ຫຼື ຂາດທຶນທີ່ໄດ້ຈາກການຂາຍ.

ການລົງທຶນທີ່ຖືຄອງຕາມອາຍຸການແມ່ນມີຕົ້ນທຶນຄ່າເສື່ອມທີ່ນຳໃຊ້ວິທີຄິດໄລ່ແບບດອກເບ້ຍແບບມີປະສິດທິພາບ, ການຫຼຸດລົງຂອງການຂາດທຶນໃນການຫັກຄ່າເສື່ອມຕ່າງໆໃຫ້ໜ້ອຍລົງ. ການຂາຍ ຫຼື ການຈັດປະເພດໃໝ່ທີ່ຫຼາຍກ່ວາຈຳນວນການລົງທຶນທີ່ຖືຄອງຕາມອາຍຸການອາດຈະສົ່ງຜົນໃຫ້ການຈັດປະເພດຄືນໃໝ່ຂອງການລົງທຶນທີ່ຖືຄອງຕາມອາຍຸການນີ້ສາມາດຂາຍໄດ້ ແລະ ສາມາດປ້ອງກັນສາຂາຈາກການຈັດປະເພດການລົງທຶນໃນຫຼັກຊັບທີ່ຖືຄອງໃນປີການນີ້ ແລະ ປີການຕໍ່ໄປໃນອີກສອງປີ. ເຖິງຢ່າງໃດກໍ່ ຕາມ, ການຂາຍ ແລະ ຈັດປະເພດໃໝ່ດັ່ງຕໍ່ໄປນີ້ຈະມີຜົນກະທົບຕໍ່ການຈັດປະເພດໃໝ່:

- ການຂາຍ ຫຼື ການຈັດປະເພດໃໝ່ທີ່ໃກ້ກັບມື້ຄົບກຳນົດທີ່ປ່ຽນແປງຕາມມູນຄ່າທ້ອງຕະຫຼາດຂອງດອກເບ້ຍຈະບໍ່ມີຜົນກະທົບສຳຄັນຕໍ່ມູນຄ່າຍຸດຕິທຳຂອງຊັບສິນບັດທາງການເງິນ.
- ການຂາຍ ຫຼື ການຈັດປະເພດໃໝ່ຫຼັງຈາກທີ່ສາຂາໄດ້ລວບລວມຫຼັກຖານທັງໝົດຂອງຕົ້ນທຶນເດີມ; ແລະ
- ການຂາຍ ຫຼື ຈັດປະເພດໃໝ່ທີ່ນອກເໜືອຈາກຄຸ້ມຄອງຂອງສາຂາທີ່ບໍ່ສາມາດຄາດຄະເນໄດ້ຢ່າງສົມເຫດສົມຜົນ.

3. **ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ (ຕໍ່)**

**(ຈ) ຕາສານສືບເນື່ອງ**

ຕາສານສືບເນື່ອງຜະລິດຕະພັນການເງິນ ແມ່ນໃຊ້ເພື່ອການຈັດການການນຳສະເໜີອັດຕາແລກປ່ຽນ, ອັດຕາດອກເບ້ຍເພີ່ມຂຶ້ນຈາກການດຳເນີນງານ, ການເງິນ ແລະ ການລົງທຶນ. ຕາສານສືບເນື່ອງຜະລິດຕະພັນການເງິນແມ່ນບໍ່ໄດ້ໃຊ້ເພື່ອຈຸດປະສົງການຄ້າ. ເຖິງຢ່າງໃດກໍ່ຕາມ, ຕາສານສືບເນື່ອງທີ່ບໍ່ເໝາະສົມກັບການປ້ອງກັນບັນຊີ ແມ່ນຈະຖືກຄຳນວນເປັນເຄື່ອງມືທາງການຄ້າ.

ຕາສານແມ່ນຖືກຮັບຮູ້ເບື້ອງຕົ້ນໃນມູນຄ່າຍຸດຕິທຳ, ລວມທັງການເຄື່ອນໄຫວຕົ້ນທຶນ ແມ່ນຖືກຮັບຮູ້ເມື່ອມີກຳໄລ ຫລື ຂາດທຶນເກີດຂຶ້ນ. ພວກເຂົາໄດ້ກຳນົດທີ່ມູນຄ່າຍຸດຕິທຳພາຍຫລັງການຮັບຮູ້ໃນເບື້ອງຕົ້ນ. ກຳໄລ ຫລື ຂາດທຶນໃນການຈັດຄືນໃຫມ່ຕໍ່ກັບມູນຄ່າຍຸດຕິທຳ ແມ່ນຖືກຮັບຮູ້ທັນທີທັນໃດໃນກຳໄລ ຫລື ຂາດທຶນ. ເຖິງຢ່າງໃດກໍ່ຕາມ, ການກຳນົດຕາສານສືບເນື່ອງເພື່ອປ້ອງກັນການບັນຊີ, ການຮັບຮູ້ຜົນກຳໄລ ຫລື ຂາດທຶນໃດໆ ແມ່ນຂຶ້ນກັບລັກສະນະຂອງລາຍການທີ່ຖືກປ້ອງກັນ.

ມູນຄ່າຍຸດຕິທຳຂອງການແລກປ່ຽນອັດຕາດອກເບ້ຍ ແມ່ນຈຳນວນທີ່ຖືກປະເມີນໂດຍທີ່ສາຂາຈະໄດ້ຮັບ ຫລື ຈ່າຍຕໍ່ການຍົກເລີກແລກປ່ຽນໃນວັນທີທີ່ລາຍງານ, ທຳການບັນທຶກເຂົ້າສູ່ບັນຊີອັດຕາດອກເບ້ຍ.

**(ສ) ເງິນກູ້ ແລະ ເງິນລ່ວງໜ້າ**

ເງິນກູ້ຢືມ ແລະ ເງິນລ່ວງໜ້າແມ່ນຂຶ້ນກັບສາຂາທີ່ຕອບສະໜອງໃຫ້ລູກຄ້າເພື່ອຈຸດປະສົງໃດໜຶ່ງຫຼາຍກວ່າການເກັບກຳໄລໄລຍະສັ້ນ.

ເງິນກູ້ຢືມ ແລະ ສິ່ງທີ່ບໍ່ແມ່ນຕາສານສືບເນື່ອງຊັບສິນທາງການເງິນທີ່ໝັ້ນຄົງ ຫຼື ກຳນົດການຊຳລະເຊິ່ງບໍ່ຖືກລະບຸໃນຕະຫລາດ ແລະ ສາຂາບໍ່ມີເຈດຈຳນົງທີ່ຈະຂາຍທັນທີ ຫຼື ໃນໄລຍະເວລາໄວໆນີ້.

ເງິນກູ້ຢືມ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າແມ່ນລວມທັງ ການຈັດຊັ້ນໜີ້ ແລະ ໜີ້ຕ້ອງຮັບ.

ເງິນກູ້ ແລະ ເງິນລ່ວງໜ້າທີ່ຖືກວັດແທກມູນຄ່າຍຸດຕິທຳໃນເບື້ອງຕົ້ນບວກກັບຄ່າໃຊ້ຈ່າຍທີ່ເພີ່ມຂຶ້ນໂດຍກົງ, ແລະ ພາຍຫຼັງການວັດແທກຕົ້ນທຶນຄ່າເສື່ອມທີ່ນຳໃຊ້ວິທີຄິດໄລ່ດອກເບ້ຍແບບມີປະສິດທິພາບ.

ເງິນກູ້ ແລະ ເງິນລ່ວງໜ້າ ແມ່ນ ການກຳນົດຕົ້ນທຶນຄ່າເສື່ອມໂດຍການນຳໃຊ້ວິທີຫັກຄ່າເສື່ອມດອກເບ້ຍທີ່ມີປະສິດທິພາບ, ໜ້ອຍກວ່າການສູນເສຍຄ່າເສື່ອມ. ເງິນກູ້ ແລະ ເງິນລ່ວງໜ້າແມ່ນຖືກສະແດງຢູ່ນອກການຕັ້ງຮັບໜີ້ຕ້ອງສົງດອກເບ້ຍ.

**(ຊ) ເງິນຝາກຈາກລູກຄ້າ**

ເງິນຝາກແມ່ນແຫ່ງເງິນທຶນໜີ້ຂອງສາຂາ. ເງິນຝາກຈະຖືກຄິດໄລ່ການຄາດຄະເນເບື້ອງຕົ້ນຕາມມູນຄ່າຍຸດຕິທຳລົບໃຫ້ການເພີ່ມຂຶ້ນຂອງທຸລະກຳມູນຄ່າຕົ້ນທຶນໂດຍກົງ, ແລະ ພາຍຫຼັງການວັດແທກໃນການຫັກຄ່າ

**3. ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ (ຕໍ່)**

**(ຊ) ເງິນຝາກຈາກລູກຄ້າ(ຕໍ່)**

ເສື່ອມຕົ້ນທຶນໂດຍການນຳໃຊ້ວິທີຄິດໄລ່ດອກເບ້ຍແບບມີປະສິດທິພາບ, ນອກຈາກສາຂາຈະກຳນົດໜີ້ສິນກັບມູນຄ່າຍຸດຕິທຳຜ່ານກຳໄລ ຫຼື ຂາດທຶນ.

**(ຍ) ຊັບສິນບັດ ແລະ ອຸປະກອນ**

(i) ລາຍການຊັບສິນບັດ ແລະ ອຸປະກອນແມ່ນບັນທຶກຕາມມູນຄ່າຊື້ລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມສະສົມ(ຖ້າມີ). ຖ້າຫາກລາຍການຊັບສິນມີຫຼາຍຊິ້ນສ່ວນທີ່ມີອາຍຸການໃຊ້ງານຕ່າງກັນແມ່ນ ໃຫ້ແຍກແຕ່ລະລາຍການຕ່າງຫາກ. ຕົ້ນທຶນທີ່ລວມທັງຄ່າໃຊ້ຈ່າຍ ແມ່ນ ຄ່າໃຊ້ຈ່າຍໂດຍກົງໃນການຊື້ຊັບສິນ.

ການຊື້ຊອຟແວຣ໌ທີ່ເປັນອົງປະກອບສຳຄັນຂອງອຸປະກອນແມ່ນໃຫ້ຄິດໄລ່ເປັນພາກສ່ວນໜຶ່ງຂອງອຸປະກອນ.

(ii) ຄ່າຫຼຸ້ຍຫ້ຽນຂອງຊັບສິນບັດແລະອຸປະກອນ ແມ່ນບັນທຶກໃນໃບລາຍງານຜົນໄດ້ຮັບໂດຍນຳໃຊ້ການຄິດໄລ່ ແບບສະເໝີຕົວຕາມອາຍຸການໃຊ້ງານຂອງຊັບສິນບັດນັ້ນໆດັ່ງລຸ່ມນີ້:

| | |
|---|---|
| ຊັບສິນທີ່ໃຫ້ເຊົ່າ | 10% |
| ອຸປະກອນເຄື່ອງໄຟຟ້າ | 20% |
| ເຄື່ອງໃຊ້, ເຄື່ອງຕິດຕັ້ງ ແລະ ອຸປະກອນອື່ນໆ | 20% |
| ພາຫະນະ | 20% |

(iii) ລາຍຈ່າຍທີ່ກ່ຽວຂ້ອງກັບຊັບສິນບັດ ແລະ ອຸປະກອນ ທີ່ເກີດຂຶ້ນພາຍຫຼັງ ແລະ ເພີ່ມເຂົ້າເປັນຕົ້ນທຶນຊັບສິນໄດ້ເມື່ອລາຍຈ່າຍເຫຼົ່ານັ້ນເຫັນວ່າຈະເກີດປະໂຫຍດໃນອະນາຄົດ ແລະ ສາມາດເພີ່ມປະສິດທິພາບຂອງຊັບສິນເດີມຂອງສາຂາ. ສ່ວນຄ່າໃຊ້ຈ່າຍອື່ນໆທີ່ຕາມມາແມ່ນໃຫ້ບັນທຶກເປັນລາຍຈ່າຍໃນໄລຍະທີ່ເກີດຂຶ້ນ. ຄ່າໃຊ້ຈ່າຍທາງດ້ານການສ້ອມແປງ ແລະ ການບຳລຸງຮັກສາຖືວ່າເປັນຄ່າໃຊ້ຈ່າຍທີ່ເກີດຂຶ້ນ.

(iv) ກຳໄລ ຫຼື ຂາດທຶນທີ່ເກີດຈາກການໝົດອາຍຸ ຫຼື ສະສາງຊັບສິນບັດ ແລະ ອຸປະກອນອອກແມ່ນໃຫ້ບັນທຶກສ່ວນແຕກຕ່າງລະຫວ່າງລາຄາຄາດຄະເນສຸດທິທີ່ສະສາງອອກກັບມູນຄ່າຍັງເຫຼືອຂອງຊັບສິນນັ້ນ ແລະ ສ່ວນແຕກຕ່າງດັ່ງກ່າວແມ່ນໄດ້ບັນທຶກລົງໃນໃບລາຍງານຜົນໄດ້ຮັບຕາມວັນທີທີ່ຊັບສິນບັດດັ່ງກ່າວໝົດອາຍຸ ຫຼື ຖືກສະສາງອອກ.

(v) ຊັບສິນ ແລະ ອຸປະກອນທີ່ມີການຫັກຄ່າຫຼຸ້ຍຫ້ຽນຄົບຕາມກຳນົດແລ້ວແມ່ນໄດ້ນຳສະເໜີຢູ່ໃນໃບສະຫຼຸບຊັບສິນບັດຈົນກ່ວາມີການຊຳລະສະສາງ ແລະ ລ້າງອອກຈາກບັນຊີ.

## 3. ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ (ຕໍ່)

### (ດ) ຊັບສິນທີ່ບໍ່ມີຕົວຕົນ

(i) ຊອຟແວຣ໌

ຊອຟແວຣ໌ທີ່ສາຂາໄດ້ຮັບມາແມ່ນບັນທຶກຕາມມູນຄ່າຊື້ລົບໃຫ້ຄ່າເສື່ອມສະສົມ ແລະ ລົບການເສື່ອມມູນຄ່າ,(ຖ້າມີ).

ຄ່າຫຼຸ້ຍຫ້ຽນຂອງຊອຟແວຣ໌ຈະບັນທຶກເປັນທຶນເມື່ອມັນເກີດຜົນປະໂຫຍດ ທີ່ມີຕົວຕົນໃຫ້ກັບຊັບສິນອື່ນທີ່ມັນກ່ຽວຂ້ອງໃນອະນາຄົດ. ສ່ວນຄ່າໃຊ້ຈ່າຍອື່ນໆແມ່ນຈະບັນທຶກເປັນລາຍຈ່າຍ ເມື່ອມັນເກີດຂຶ້ນ.

ຄ່າເສື່ອມແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບບົນພື້ນຖານການປະເມີນອາຍຸການນຳໃຊ້ ຂອງຊອຟແວຣ໌, ຈາກມື້ທີ່ມັນສາມາດນຳໃຊ້ໄດ້. ການປະເມີນອາຍຸການນຳໃຊ້ຂອງຊອຟແວຣ໌ແມ່ນ 5 ປີ.

(ii) ສິດນຳໃຊ້ທີ່ດິນ

ສິດນຳໃຊ້ທີ່ດິນປະກອບມີມູນຄ່າທີ່ເກີດຂຶ້ນຈາກການຊື້ສິດນຳໃຊ້ທີ່ດິນຕົວຈິງ ແລະ ຄ່າຕອບແທນ ຂອງດິນ. ມູນຄ່າເບື້ອງຕົ້ນແມ່ນອີງຕາມມູນຄ່າທີ່ເກີດຂຶ້ນ ແລະ ມູນຄ່າຂອງດິນທີ່ໄດ້ຮັບຮອງຈາກ ທາງລັດຖະບານໃນເວລາຊື້. ການຫັກຄ່າເສື່ອມແມ່ນຮັບຮູ້ບົນພື້ນຖານການຄາດຄະເນໄລຍະເວລາຂອງຜົນປະໂຫຍດທີ່ເກີດຈາກສິດນຳໃຊ້ທີ່ດິນດັ່ງກ່າວນັ້ນ.

### (ຕ) ລາຍຮັບດອກເບ້ຍ

ລາຍຮັບທາງດ້ານດອກເບ້ຍແມ່ນຮັບຮູ້ໃນກຳໄລ ຫຼື ຂາດທຶນໂດຍນຳໃຊ້ວິທີຄິດໄລ່. ອັດຕາດອກເບ້ຍທີ່ມີປະສິດທິພາບແມ່ນອັດຕາແທ້ຈິງການຄາດຄະເນເງິນສົດທີ່ໄດ້ຮັບດອກເບ້ຍທີ່ມີປະສິດທິພາບໃນອະນາຄົດໂດຍອາຍຸການຄາດຄະເນຊັບສິນການເງິນທີ່ຈະໄດ້ຮັບ (ຫຼື ຕາມໄລຍະເວລາທີ່ເໝາະສົມ ຫຼື ໄລຍະເວລາທີ່ສັ້ນເພື່ອຍົກຍອດຊັບສິນທາງການເງິນ. ເມື່ອຄຳນວນອັດຕາດອກເບ້ຍທີ່ແທ້ຈິງ, ສາຂາຈະຄຳນວນກະແສເງິນສົດໃນອະນາຄົດໂດຍພິຈາລະນາຕາມເງື່ອນໄຂສັນຍາເຄື່ອງມືທາງດ້ານການເງິນແຕ່ບໍ່ແມ່ນການ ຂາດທຶນໃນອະນາຄົດ. ການຄຳນວນອັດຕາດອກເບ້ຍທີ່ແທ້ຈິງແມ່ນລວມທັງຄ່າທຳນຽມທາງທຸລະກຳທາງການເງິນທັງໝົດທີ່ໄດ້ຮັບ ແລະ ເປັນສ່ວນໜຶ່ງຂອງອັດຕາດອກເບ້ຍທີ່ແທ້ຈິງ. ຄ່າໃຊ້ຈ່າຍທາງດ້ານທຸລະກຳທາງການເງິນແມ່ນລວມທັງຄ່າໃຊ້ຈ່າຍໂດຍກົງທີ່ກ່ຽວກັບການໄດ້ມາຂອງຊັບສິນທາງດ້ານການເງິນ.

### (ຖ) ລາຍຈ່າຍດອກເບ້ຍ

ລາຍຈ່າຍດອກເບ້ຍແມ່ນຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນໂດຍໃຊ້ວິທີຄິດໄລ່ດອກເບ້ຍທີ່ມີປະສິດທິພາບ. ອັດຕາດອກເບ້ຍທີ່ມີປະສິດທິພາບແມ່ນອັດຕາແທ້ຈິງການຄາດຄະເນເງິນສົດທີ່ໄດຮັບດອກເບ້ຍທີ່ມີປະສິດທິພາບໃນອະນາຄົດໂດຍອາຍຸການຄາດຄະເນໜີ້ສິນການເງິນທີ່ຈະໄດ້ຮັບ (ຫຼື ຕາມໄລຍະເວລາທີ່ເໝາະສົມ ຫຼື ໄລຍະເວລາທີ່ສັ້ນ) ເພື່ອຍົກຍອດໜີ້ສິນທາງການເງິນ. ເມື່ອຄິດໄລ່ຕາມອັດຕາດອກເບ້ຍທີ່ມີປະສິດ

---

**3. ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ (ຕໍ່)**

**(ຖ) ລາຍຈ່າຍດອກເບ້ຍ(ຕໍ່)**

ທີພາບ, ສາຂາຈະຄາດຄະເນກະແສເງິນສົດໃນອະນາຄົດເພື່ອພິຈາລະນາທຸກຂໍ້ກຳນົດຂອງສັນຍາເຄື່ອງມືທາງການເງິນ, ແຕ່ບໍ່ແມ່ນການສູນເສຍຂອງສິນເຊື່ອໃນອະນາຄົດ.

ການຄິດໄລ່ຕາມອັດຕາດອກເບ້ຍທີ່ມີປະສິດທິພາບລວມທັງຕົ້ນທຶນທີ່ມີປະສິດທິພາບທັງໝົດ ແລະ ຄ່າທຳນຽມ, ຈຸດຈ່າຍທີ່ເປັນສ່ວນໜຶ່ງທີ່ສຳຄັນຂອງອັດຕາສ່ວນດອກເບ້ຍທີ່ມີປະສິດທິພາບ. ລາຍການຕົ້ນທຶນລວມມີຄ່າໃຊ້ຈ່າຍທີ່ເພີ່ມຂຶ້ນທີ່ຕິດພັນໂດຍກົງກັບບັນຫາຂອງໜີ້ສິນທາງການເງິນ.

**(ທ) ຄ່າທຳນຽມ ແລະ ຄ່ານາຍໜ້າ**

ສາຂາໄດ້ຮັບຄ່າທຳນຽມ ແລະ ຄ່ານາຍໜ້າຈາກແຕ່ລະ ລະດັບການບໍລິການທີ່ຕອບສະໜອງໃຫ້ແກ່ລູກຄ້າ ຄ່າທຳນຽມ ແລະ ຄ່ານາຍໜ້າສາມາດແບ່ງອອກເປັນສອງກໍລະນີຄື:

*ຄ່າທຳນຽມທີ່ໄດ້ຮັບຈາກການບໍລິການເກີນໄລຍະເວລາໃດໜຶ່ງ.*

ຄ່າທຳນຽມທີ່ໄດ້ຮັບຈາກການບໍລິການເກີນໄລຍະເວລາໃດໜຶ່ ງຈະຖືກຕັ້ງໄວ້ໃນຊ່ວງ ໄລຍະເວລາດັ່ງກ່າວ. ຄ່າທຳນຽມເຫຼົ່ານັ້ນລວມທັງລາຍຮັບຄ່ານາຍໜ້າ ແລະ ຄ່າບໍລິຫານຊັບສິນ, ຄ່າການຮັກສາ ແລະ ຄ່າບໍລິຫານ ແລະ ຄ່າປຶກສາອື່ນໆ. ຄ່າທຳນຽມເງິນກູ້ຢືມຕາມຄຳໝັ້ນສັນຍາທີ່ມີແນວໂນ້ມຈະໄດ້ຮັບການອະນຸມັດ ແລະ ຄ່າທຳນຽມອື່ນໆທີ່ກ່ຽວຂ້ອງກັບໜີ້ສິນ (ລວມທັງຄ່າໃຊ້ຈ່າຍອື່ນໆທີ່ເພີ່ມຂຶ້ນ) ແລະ ຖືກຍອມຮັບວ່າເປັນການດັດແກ້ EIR ໃນການກູ້ຢືມ. ເມື່ອເຫັນວ່າເງິນກູ້ຢືມຈະໄດ້ຮັບການອະນຸມັດ, ຄ່າທຳນຽມເງິນກູ້ຢືມຕາມຄຳໝັ້ນສັນຍາ ແມ່ນ ຈະຖືກຮັບຮູ້ໃນຊ່ວງໄລຍະຂອງຄຳໝັ້ນສັນຍາທີ່ເກີດຂຶ້ນບົນພື້ນຖານແບບຕໍ່ເນື່ອງ.

*ລາຍຮັບທາງດ້ານຄ່າທຳນຽມໃນການສະໜອງການບໍລິການທຸລະກຳທາງການເງິນ*

ຄ່າທຳນຽມເກີດຂຶ້ນຈາກການຕໍ່ລອງ ຫຼື ການເຂົ້າຮ່ວມໃນການເຈລະຈາທາງດ້ານທຸລະກຳໃດໜຶ່ງໃຫ້ແກ່ບຸກຄົນທີສາມເຊັ່ນ ການຈັດຊື້ຫຼັກຊັບທີ່ໄດ້ຮັບການຍອມຮັບທາງດ້ານທຸລະກຳ. ຄ່າທຳນຽມ ຫຼື ສ່ວນໜຶ່ງຂອງຄ່າທຳນຽມທີ່ກ່ຽວຂ້ອງກັບການດຳເນີນການຫຼັງຈາກທີ່ໄດ້ຮັບການຍອມຮັບຕາມເງື່ອນໄຂໃດໜຶ່ງ.

**(ນ) ລາຍຈ່າຍອາກອນ**

ລາຍຈ່າຍອາກອນປະກອບດ້ວຍອາກອນທີ່ຕ້ອງຈ່າຍໃນປະຈຸບັນ ແລະ ອາກອນເຍື້ອນຊຳລະ. ອາກອນທີ່ຕ້ອງຈ່າຍໃນປະຈຸບັນ ແລະ ອາກອນເຍື້ອນຊຳລະແມ່ນຖືກຮັບຮູ້ໃນການຄິດໄລ່ຜົນກຳໄລ ຫຼື ຂາດທຶນຍົກເວັ້ນບາງລາຍການທີ່ກ່ຽວຂ້ອງໂດຍກົງກັບທຶນ ຫຼື ໃນໃບລາຍງານຜົນໄດ້ຮັບ.

**ອາກອນທີ່ຕ້ອງຈ່າຍໃນປະຈຸບັນ**

ອາກອນທີ່ຕ້ອງຈ່າຍໃນປະຈຸບັນ ແມ່ນອາກອນທີ່ໄດ້ຈ່າຍ ຫຼື ໄດ້ຮັບໃນອາກອນກຳໄລ ຫຼື ຂາດທຶນໃນປີ ແລະ ອາດມີການປັບປຸງອາກອນກຳໄລທີ່ໄດ້ຈ່າຍໄປໃນປີຜ່ານມາເຊິ່ງຈະນຳໃຊ້ອັດຕາອາກອນກຳໄລໃນມື້

3. **ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ (ຕໍ່)**

(ນ) **ລາຍຈ່າຍອາກອນ(ຕໍ່)**

ລາຍງານ.

ການບໍລິຫານປະເມີນຕຳແໜ່ງຂອງການສົ່ງຄືນອາກອນເມື່ອເຫັນວ່າມີເຫດການໃດໜຶ່ງທີ່ກ່ຽວຂ້ອງກັບກົດລະບຽບທາງດ້ານອາກອນ ແມ່ນຕ້ອງໄດ້ຮັບການຕີຄວາມໝາຍ ແລະ ກຳນົດຈຳນວນການຊຳລະ ອາກອນໃຫ້ແກ່ເຈົ້າໜ້າທີ່ສ່ວຍສາອາກອນ.

ສຳລັບຜົນກຳໄລຂອງປີ, ສາຂາຈະຕ້ອງຊຳລະອາກອນກຳໄລໃນອັດຕາ 24% ຂອງອັດຕາອາກອນກຳໄລ.

**ອາກອນເຍື້ອນຊຳລະ**

ອາກອນເຍື້ອນຊຳລະຈະຖືກຮັບຮູ້ໃນຄວາມແຕກຕ່າງຊົ່ວຄາວລະຫວ່າງມູນຄ່າຂອງຊັບສິນ ແລະ ໜີ້ສິນເພື່ອຈຸດປະສົງຂອງການລາຍງານການເງິນ ແລະ ມູນຄ່າທີ່ເສຍອາກອນ. ອາກອນເຍື້ອນຊຳລະຈະບໍ່ຖືກຮັບຮູ້ໃນກໍລະນີດັ່ງລຸ່ມນີ້:

- ຄວາມແຕກຕ່າງຊົ່ວຄາວຂອງການຮັບຮູ້ຊັບສິນ ຫຼື ໜີ້ສິນໃນເບື້ອງຕົ້ນໃນການເຮັດທຸລະກຳທີ່ບໍ່ແມ່ນການຮ່ວມທຸລະກິດ ແລະ ທີ່ບໍ່ມີຜົນກະທົບໃນທາງບັນຊີ ແລະ ອາກອນກຳໄລ ຫຼື ຂາດທຶນ.
- ຄວາມແຕກຕ່າງຊົ່ວຄາວທີ່ກ່ຽວຂ້ອງກັບການລົງທຶນເພື່ອເພີ່ມສາຂາຊຶ່ງອາດເປັນໄປໄດ້ວ່າມັນຈະສາມາດກັບຄືນມາໃນອານາຄົດ; ແລະ
- ຄວາມແຕກຕ່າງທາງດ້ານການຊຳລະອາກອນຊົ່ວຄາວທີ່ເກີດຂຶ້ນຈາກຄ່ານິຍົມໃນຂັ້ນເລີ່ມຕົ້ນ.

ການວັດແທກມູນຄ່າຂອງການເຍື້ອນຊຳລະອາກອນສະທ້ອນໃຫ້ເຫັນເຖິງຜົນກະທົບທາງດ້ານອາກອນທີ່ຈະເປັນໄປຕາມຮູບແບບທີ່ສາຂາຄາດຫວັງ, ໃນບົດລາຍງານທ້ າຍປີເພື່ອກູ້ຄືນ, ຫຼື ຊຳລະໜີ້ສິນທີ່ຍັງເຫຼືອຂອງຊັບສິນ ແລະ ໜີ້ສິນ.

ອາກອນເຍື້ອນຊຳລະແມ່ນຖືກວັດແທກຕາມອັດຕາອາກອນທີ່ຄາດວ່າຈະຖືກນຳໃຊ້ກັບຄວາມແຕກຕ່າງເມື່ອເກີດມີການໄດ້ກັບຄືນໂດຍໃຊ້ອັດຕາອາກອນທີ່ປະກາດໃຊ້ໃນມື້ທີ່ມີການລາຍງານ.

ອາກອນເຍື້ອນຊຳລະຊັບສິນ ແລະ ໜີ້ສິນຈະຖືກລົບລ້າງກັນຖ້າວ່າມີຄວາມຖືກຕ້ອງຕາມກົດໝາຍທີ່ຈະສາມາດຫັກລົບກັນໄດ້ກັບອາກອນຊັບສິນ ແລະ ໜີ້ສິນໃນປະຈຸບັນ, ແລະ ພວກເຂົາກໍ່ມີຄວາມກ່ຽວພັນກັບອາກອນທີ່ຖືກຮຽກເກັບຈາກເຈົ້າໜ້າທີ່ສ່ວຍສາອາກອນໃນກຸ່ມອາກອນດຽວກັນ ຫຼື ກຸ່ມອາກອນຕ່າງກັນ. ແຕ່ວ່າພວກເຂົາມີຄວາມຕ້ອງການທີ່ຈະກຳນົດອາກອນຊັບສິນ ແລະ ໜີ້ສິນໃນປະຈຸບັນອີງຕາມພື້ນຖານສຸດທິ ຫຼື ອາກອນຊັບສິນ ແລະ ໜີ້ສິນຂອງພວກເຂົາຈະຖືກຮັບຮູ້ພ້ອມກັນ.

ອາກອນຊັບສິນເຍື້ອນຊຳລະຈະຖືກຮັບຮູ້ໃນແບບອາກອນຂາດທຶນ, ອາກອນສິນເຊື່ອ ແລະ ຄວາມແຕກຕ່າງຊົ່ວຄາວເມື່ອມີຄວາມເປັນໄປໄດ້ວ່າອາກອນກຳໄລທີ່ເສຍໃນອະນາຄົດຈະສາມາດນຳມາໃຊ້ຫັກໄດ້. ອາກອນຊັບສິນເຍື້ອນຊຳລະຈະຖືກກວດຄືນໃນມື້ລາຍງານ ແລະ ຈະຖືກຫຼຸດລົງເມື່ອບໍ່ມີຄວາມເປັນໄປໄດ້ວ່າຜົນປະໂຫຍດຂອງອາກອນທີ່ກ່ຽວຂ້ອງນັ້ນຈະສາມາດຮັບຮູ້ໄດ້.

## 3. ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ (ຕໍ່)

### (ນ) ລາຍຈ່າຍອາກອນ (ຕໍ່)

**ອາກອນຂອງສາຂາ**

ອາກອນກຳໄລຂອງສາຂາອາດຖືກກວດສອບໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ຍ້ອນການນຳໃຊ້ກົດລະບຽບ ແລະ ລະບຽບການອາກອນໃນແຕ່ລະກິດຈະກຳທີ່ຖືກຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນອາກອນກຳໄລທີ່ຖືກລາຍງານໃນບົດລາຍງານຖານະການເງິນອາດຈະມີການປ່ຽນແປງພາຍຫລັງການພິຈາລະນາຂອງເຈົ້າໜ້າທີ່ສ່ວຍສາອາກອນ.

*ລະບົບການເກັບອາກອນໃນ ສປປ ລາວ ແມ່ນຄ່ອນຂ້າງໃຫມ່ ແລະ ແມ່ນໂດຍສະເພາະການເສຍອາກອນຈຳນວນຫລາຍ ແລະ ມີການປ່ຽນແປງນິຕິກຳເລື້ອຍໆ, ເຊິ່ງອາດຍັງບໍ່ຈະແຈ້ງ, ຂັດແຍ່ງ ແລະ ການຕີຄວາມຫມາຍທີ່ຍັງບໍ່ຈະແຈ້ງ. ປົກກະຕິແລ້ວ ການຕີຄວາມຫມາຍລະຫວ່າງເຈົ້າຫນ້າທີ່ສ່ວຍສາອາກອນທີ່ແຕກຕ່າງກັນແມ່ນເກີດຂຶ້ນເລື້ອຍໆ. ອາກອນແມ່ນຈະຖືກຍື່ນເພື່ອການກວດກາ ແລະ ທົບທວນຄືນໂດຍຫລາຍເຈົ້າຫນ້າທີ່ສ່ວຍສາອາກອນ ໂດຍຈະກຳນົດຕາມກົດຫມາຍ ເພື່ອຄ່າປັບໄຫມ, ລົງໂທດ ແລະ ຫັກຄ່າໃຊ້ຈ່າຍດອກເບ້ຍ.*

ເຫດຜົນທີ່ກ່າວມານີ້ ອາດຈະກໍ່ໃຫ້ເກີດຄວາມສ່ຽງຕໍ່ອາກອນໃນ ສປປ ລາວ ຫລາຍກວ່າໃນບັນດາປະເທດອື່ນ. ຜູ້ບໍລິຫານເຊື່ອວ່າທາງສາຂາຕັ້ງອາກອນຕ້ອງຈ່າຍພຽງພໍຕາມການຕີຄວາມຫມາຍຂອງອາກອນ. ເຖິງຢ່າງໃດກໍ່ຕາມ, ເຈົ້າໜ້າທີ່ສວຍສາອາກອນອາດຕີຄວາມຫມາຍທີ່ແຕກຕ່າງ ແລະ ອາດສົ່ງຜົນກະທົບສາລະສຳຄັນຕໍ່ທະນາຄານ.

### (ບ) ເງິນແຮ

ເງິນແຮແມ່ນຖືກຮັບຮູ້ຖ້າຫາກວ່າມີຜົນໄດ້ຮັບຫຼັງຈາກເຫດການນັ້ນໄດ້ຜ່ານໄປ, ສາຂາມີພັນທະຕາມກົດໝາຍ ຫຼື ພັນທະໂດຍກົງເຊິ່ງສາມາດປະເມີນຄວາມຈິງໄດ້, ແລະ ມີຄວາມເປັນໄປໄດ້ຄ່ອນຂ້າງແນ່ນອນວ່າການຮົ່ວໄຫຼຂອງຜົນປະໂຫຍດໃນທາງທຸລະກິດແມ່ນຖືກຮຽກຮ້ອງໃຫ້ມີພັນທະໃນການຊຳລະຫນີ້ສິນດັ່ງກ່າວ.

ເງິນແຮແມ່ນເງິນກຳນົດໂດຍການຫຼຸດກະແສເງິນສົດໃນອານາຄົດໃນອັດຕາອາກອນລ່ວງໜ້າທີ່ສົ່ງຜົນກະທົບ ຕໍ່ການປະເມີນຂອງມູນຄ່າຂອງເງິນ ແລະ ຄວາມສ່ຽງສະເພາະຂອງໜີ້ສິນ.

### (ປ) ພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນທີ່ກ່ຽວຂ້ອງກັບສາຂາ ແມ່ນພາກສ່ວນທີ່ມີຄວາມອາດສາມາດໂດຍທາງກົງ ຫຼື ທາງອ້ອມທີ່ຈະຄວບຄຸມພາກສ່ວນອື່ນ ຫຼື ມີອຳນາດທີ່ພົ້ນເດັ່ນຕໍ່ກັບພາກສ່ວນອື່ນທີ່ກ່ຽວຂ້ອງກັນກັບການຕັດສິນໃຈ ກ່ຽວກັບການເງິນ ແລະ ການດຳເນີນງານ ຫຼື ສາຂາພ້ອມກັບພາກສ່ວນດັ່ງກ່າວມີການຄວບຄຸມ

ຮ່ວມກັນ ຫຼື ມີອຳນາດທີ່ພົ້ນເດັ່ນ. ພາກສ່ວນທີ່ກ່ຽວຂ້ອງອາດເປັນບຸກຄົນ ຫຼື ບໍລິສັດ ແລະ ລວມທັງສະມາຊິກຄອບຄົວຂອງບຸກຄົນໃດໜຶ່ງທີ່ຖືວ່າເປັນພາກສ່ວນທີ່ກ່ຽວຂ້ອງ.

4. **ຜົນກະທົບຂອງການອອກນຳໃຊ້ແຕ່ບໍ່ກະທົບເຖິງມາດຕະຖານລາຍງານການເງິນສາກົນ** IFRS

ສາຂາຍັງບໍ່ໄດ້ນຳໃຊ້ການດັດແກ້ IFRS ແລະ IASs ໃໝ່ທີ່ຖືກປະກາດໃຊ້ ແລະ ຍັງບໍ່ມີຜົນສັກສິດໃນບົດລາຍງານຖານະການເງິນສະບັບນີ້.

IAS 16 ສະບັບປັບປຸງ ທີ່ດິນ ອາຄານ ແລະ ອຸປະກອນ[1]

IAS 38 ສະບັບປັບປຸງ ຊັບສິນທີ່ບໍ່ມີຕົວຕົນ[1]

IFRS 9 ເຄື່ອງມືທາງການເງິນ[2]

*1*ມີຜົນບັງຄັບໃຊ້ໃນຮອບປີ ກ່ອນຫຼືຫລັງຈາກວັນທີ 1 ມັງກອນ 2016, ການປະຕິບັດກ່ອນກຳນົດແມ່ນສາມາດເຮັດໄດ້.

*2*ມີຜົນບັງຄັບໃຊ້ໃນຮອບປີ ກ່ອນຫຼືຫລັງຈາກວັນທີ 1 ມັງກອນ 2018, ການປະຕິບັດກ່ອນກຳນົດແມ່ນສາມາດເຮັດໄດ້.

ຂໍ້ມູນເພີ່ມເຕີມກ່ຽວກັບການປ່ຽນແປງຄາດວ່າຈະມີຜົນກະທົບຕໍ່ສາຂາມີດັ່ງຕໍ່ໄປນີ້:

*ການປັບປຸງຕໍ່ສະບັບ IAS 16, ທີ່ດິນອາຄານ ແລະ ອຸປະກອນ ແລະ ສະບັບ IAS 38, ຊັບສິນທີ່ບໍ່ມີຕົວຕົນ "ວິທີການຈັດຊັ້ນຂອງການຍອມຮັບວິທີການຫັກຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ"*

ການດັດແກ້ທີ່ໄດ້ນຳສະເໜີການສົມມຸດຖານໃນ IAS 38 ເຊິ່ງທີ່ນຳໃຊ້ລາຍໄດ້-ຕາມວິທີການຫັກຄ່າເສື່ອມສຳລັບຊັບສິນທີ່ບໍ່ມີຕົວຕົນທີ່ບໍ່ເໝາະສົມ. ການສົມມຸດຖານນີ້ສາມາດເປັນໄປໄດ້ກໍ່ຕໍ່ເມື່ອມີລາຍໄດ້ ແລະ ມີການບໍລິໂພກ ຂອງຜົນປະໂຫຍດທາງດ້ານເສດຖະກິດຂອງຊັບສິນທີ່ບໍ່ມີຕົວຕົນ 'ມີຄວາມສຳພັນສູງ', ຫຼື ເມື່ອຊັບສິນທີ່ບໍ່ມີຕົວຕົນຖືກສະແດງເປັນການວັດແທກກັບລາຍໄດ້. ການດັດແກ້ດັ່ງກ່າວຍັງຫ້າມບໍ່ໃຫ້ໃຊ້ກັບລາຍຮັບ-ອີງຕາມວິທີການຫັກຄ່າເສື່ອມສຳລັບຊັບສິນ, ອາຄານ ແລະ ອຸປະກອນ ພາຍໃຕ້ IAS 16.

ການດັດແກ້ດັ່ງກ່າວນີ້ບໍ່ໄດ້ມີຜົນກະທົບສຳຄັນຕໍ່ກັບບົດລາຍງານການເງິນຂອງສາຂາ.

*IFRS 9 "ເຄື່ອງມືທາງດ້ານການເງິນ"*

ໃນວັນທີ 24 ກໍລະກົດ 2014, IASB ໄດ້ອອກມາດຕະຖານ IFRS 9 ຢ່າງສົມບູນແບບ(IFRS 9 (2014)).

*ການຈັດປະເພດ ແລະ ການວັດແທກຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນ.*

IFRS 9 (2014) ລວມມີທຸລະກິດລະດັບທີ 3 ແລະ ຮຽກຮ້ອງໃຫ້ເຄື່ອງມືທາງດ້ານໜີ້ສິນຈຳນວນໜຶ່ງສາມາດເປັນມູນຄ່າຍຸດຕິທຳຜ່ານລາຍຮັບອື່ນໆຂອງການຫຼຸດຄ່າຫຼຸ້ຍຫ້ຽນໂດຍການນຳໃຊ້ຄືນ. ສຳລັບການຈັດປະເພດ ແລະ ການວັດແທກ, IFRS 9 ໄດ້ນຳສະເໜີເງື່ອນໄຂໃໝ່ສຳລັບ ກຳໄລ ແລະ ຂາດທຶນຂອງການກຳນົດດ້ານໜີ້ສິນທາງການເງິນໃນມູນຄ່າຍຸດຕິທຳຜ່ານກຳໄລ ຫຼື ຂາດທຶນ ເຊິ່ງແມ່ນລັກສະນະຂອງການປ່ຽນແປງໃນການເປັນເຈົ້າຂອງຄວາມສ່ຽງໜີ້ສິນທີ່ຖືກຮັບຮູ້ໃນລາຍຮັບອື່ນໆ, ຍອດເຫຼືອຂອງ

ການປ່ຽນແປງໃນມູນຄ່າຍຸດຕິທຳທີ່ຖືກຮັບຮູ້ໃນສ່ວນກຳໄລ ຫຼື ຂາດທຶນ (“ເງື່ອນໄຂການເປັນເຈົ້າຂອງຄວາມສ່ຽງ”).

4. ຜົນກະທົບຂອງການອອກນຳໃຊ້ແຕ່ບໍ່ກະທົບເຖິງມາດຕະຖານລາຍງານການເງິນສາກົນ IFRS (ຕໍ່)

*ການປ້ອງກັນຄວາມສ່ຽງທາງດ້ານບັນຊີ*

ມາດຕະຖານໃໝ່ກຳນົດການປ້ອງກັນທາງດ້ານບັນຊີໃກ້ຊິດຕິດແທດກັບຄວາມສ່ຽງທາງດ້ານບໍລິຫານ. ເຊິ່ງບໍ່ແມ່ນການປ່ຽນແປງການປ້ອງກັນ ຫຼື ເງື່ອນໄຂຂອງການວັດແທກ ແລະ ການຮັບຮູ້ທີ່ບໍ່ມີປະສິດທິຜົນ. ເຖິງຢ່າງໃດກໍ່ຕາມ, ຍຸດທະສາດຂອງການປ້ອງກັນຄວາມສ່ຽງແມ່ນຖືກນຳໃຊ້ເພື່ອການບໍລິຫານຄວາມສ່ຽງທີ່ຈະແທດເໝາະກັບການປ້ອງການຄວາມສ່ຽງທາງດ້ານບັນຊີ.

*ການຫັກຄ່າເສື່ອມ*

ວິທີຄິດໄລ່ການຫັກຄ່າແບບໃໝ່ໃນ IFRS 9 ໄດ້ປ່ຽນແທນຮູບແບບ "ການເກີດການຂາດທຶນ" ຮູບແບບທີ່ກຳນົດໃນ IAS 39 ແມ່ນ "ການຄາດຄະເນການຂາດທຶນ". ພາຍໃຕ້ IFRS 9 ບໍ່ມີຄວາມຈຳເປັນຕໍ່ກັບສິນເຊື່ອທີ່ເກີດຂຶ້ນກ່ອນການຂາດທຶນຈະຖືກຮັບຮູ້.

ສາຂາໄດ້ປະເມີນຜົນກະທົບຂອງການດັດແກ້ໃນບົດລາຍງານຖານະການເງິນ ແລະ ການສະແດງອອກໃນປັດຈຸບັນ.

## 5. ເງິນສົດ

| | 2014<br>ກີບ | 2013<br>ກີບ |
|---|---|---|
| ເງິນລາວກີບ ("ກີບ") | 9,248,342,500 | 1,067,079,000 |
| ເງິນໂດລາສະຫະລັດ ("ໂດລາ") | 23,332,764,924 | 1,963,365,192 |
| ເງິນໄທບາດ ("ໄທບາດ") | 7,506,094,876 | 2,905,800,406 |
| ເງິນຢວນ ("ຢວນ") | 2,228,819,626 | 12,636,611,223 |
| | **42,316,021,926** | **18,572,855,821** |

## 6. ເງິນຝາກລະຫວ່າງທະນາຄານ ແລະ ຕະຫຼາດເງິນ (ຊັບສິນ)

| | 2014<br>ກີບ | 2013<br>ກີບ |
|---|---|---|
| ເງິນລາວກີບ ("ກີບ") | 19,166,063,414 | 40,931,893,959 |
| ເງິນຕາຕ່າງປະເທດອື່ນໆ | 166,029,943,081 | 121,793,324,133 |
| | **185,196,006,495** | **162,725,218,092** |

**6. ເງິນຝາກລະຫວ່າງທະນາຄານ ແລະ ຕະຫຼາດເງິນ (ຊັບສິນ) (ຕໍ່)**

ກ) ທະນາຄານພາຍໃນ

| | 2014<br>ກີບ | 2013<br>ກີບ |
|---|---|---|
| **ຕາມການຮຽກເກັບ** | | |
| ທະນາຄານແຫ່ງ ສ ປປ ລາວ | 15,900,705,657 | 35,425,670,130 |
| ທະນາຄານທຸລະກິດອື່ນໆ | 3,265,357,757 | 5,506,223,829 |
| | **19,166,063,414** | **40,931,893,959** |

ຂ) ທະນາຄານຕ່າງປະເທດ

| | 2014<br>ກີບ | 2013<br>ກີບ |
|---|---|---|
| **ຕາມການຮຽກເກັບ** | | |
| ໂດລາ | 76,290,336,398 | 98,813,132,515 |
| ໄທບາດ | 12,296,680,697 | 15,706,441,726 |
| ຢວນ | 77,442,925,986 | 7,273,749,892 |
| | **166,029,943,081** | **121,793,324,133** |

**7. ເງິນຝາກຕາມລະບຽບການກັບທະນາຄານກາງ**

| | 2014<br>ກີບ | 2013<br>ກີບ |
|---|---|---|
| ເງິນຝາກຕາມລະບຽບການ: | | |
| ເງິນທືນ | 7,539,719,883 | 7,539,719,883 |
| ເງິນຝາກຂອງລູກຄ້າ | 145,242,898,297 | 131,580,129,533 |
| | **152,782,618,180** | **139,119,849,416** |

ເງິນຝາກຕາມລະບຽບການຈາກເງິນລົງທຶນ ແມ່ນໄດ້ຝາກນຳທະນາຄານແຫ່ງ ສປປ ລາວ ("ທະນາຄານກາງ ຫຼື ທຫລ") ເພື່ອໃຫ້ສອດຄ່ອງກັບຂໍ້ກຳນົດຂອງ ທຫລ.

ເງິນຝາກເຫຼົ່ານີ້ແມ່ນບໍ່ມີດອກເບ້ຍ.

## 8. ເງິນລົງທຶນ

| | 2014<br>ກີບ | 2013<br>ກີບ |
|---|---|---|
| ພັນທະບັດລັດຖະບານ | 1,982,008,000,000 | 1,567,696,000,000 |
| ພັນທະບັດທາງການເງິນ | 25,770,916,691 | - |
| | **2,007,778,916,691** | **1,567,696,000,000** |

ການລົງທຶນນະທີ່ນີ້ໝາຍເຖິງການລົງທຶນໃນພັນທະບັດທີ່ຄອບຄອງຈົນຮອດເວລາກຳນົດ. ພັນທະບັດເຫລົ່ານີ້ ມີໄລຍະເວລາຄົບກຳນົດຕັ້ງແຕ່ ວັນທີ 28 ກຸມພາ 2015 ຫາ 27 ພຶດສະພາ 2019 (2013: 23 ພຶດສະພາ 2014 ຫາ 29 ມັງກອນ 2018) ແລະ ອັດຕາດອກເບ້ຍຕັ້ງແຕ່ 4.33% ຫາ 9% (2013: 4.38% ຫາ 9%).

## 9. ເງິນກູ້ ແລະ ເງິນລ່ວງໜ້າ

| | 2014<br>ກີບ | 2013<br>ກີບ |
|---|---|---|
| ເງິນໃຫ້ກູ້ຢືມ ແລະ ດອກເບ້ຍຕ້ອງຮັບ: | | |
| - ເງິນເບີກເກີນບັນຊີ | 1,299,767,632 | 538,250,852 |
| - ເງິນໃຫ້ກູ້ຢືມ | 9,412,231,072,701 | 6,228,506,474,192 |
| | **9,413,530,840,333** | **6,229,044,725,044** |
| ເງິນແຮຄ່າເສື່ອມ: | | |
| - ການເກັບເງິນແຮຄ່າເສື່ອມ | - | - |
| - ເງິນແຮຄ່າເສື່ອມສະເພາະ | - | - |
| | - | - |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | **9,413,530,840,333** | **6,229,044,725,044** |

### ກ) ແຍກຕາມອາຍຸຂອງສິນເຊື່ອ

| | 2014<br>ກີບ | 2013<br>ກີບ |
|---|---|---|
| ພາຍໃນ 1 ປີ | 8,691,867,907,798 | 5,498,759,765,044 |
| ເກີນ 1 ປີ | 721,662,932,535 | 730,284,960,000 |
| | **9,413,530,840,333** | **6,229,044,725,044** |

**9.** ເງິນກູ້ ແລະ ເງິນລ່ວງໜ້າ(ຕໍ່)

ຂ) ແຍກຕາມສະກຸນເງິນ

| | 2014<br>ກີບ | 2013<br>ກີບ |
|---|---|---|
| ກີບ | 1,055,839,711 | 445,918,183 |
| ໂດລາ | 9,351,642,902,701 | 6,178,668,334,192 |
